ຄະນະຜູ້ຈັດທຳ ຄຳແນະນຳສຳລັບຄຣູສອນ

Copyright © 2004 by BAPTISTWAY PRESS®.
ສງວນລິກຂະສິດ

ອະນຸດຍາດໃຫ້ທາງຄຣິສຕະຈັກເຮັດກອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ.  ຫ້າມຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນໆ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ.  ຖ້າຢາກຊາບລາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas, 333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office.

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ ໄດ້ຄັດມາຈາກປື້ມພຣະຄັມພີຕາມທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິຂະສິດຂອງປຶ້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ:  ເດືອນ ມີນາ, ໒004

BAPTISTWAY Management Team

Executive Director, Baptist General Convention of Texas: Charles Wade
Coordinator, Church Health and Growth Section: H. Lynn Eckeberger
Director, Bible Study/Discipleship Center: Dennis Parrott
Publishing consultant: Ross West, Positive Difference Communications

Language Materials Team

Teaching Procedures Writer for Lesson 4-6
Bounheng Phongpraphan, First Lao Baptist Church, Amarillo, Texas
Editor for Lesson 4-6
Phaisane Somsith, Grace Baptist Church, Dallas, Texas

Teaching Procedures Writer for Lesson 2, 3, 8-10
Sidney Kahn, Saginaw Community Church, Fort Worth, Texas
Editor for Lesson 2, 3, 8-10
Phaisane Somsith, Grace Baptist Church, Dallas, Texas

Teaching Procedures Writer for Lesson 1, 7, 11-13, Christmas Lesson
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lesson 1, 7, 11-13, Christmas Lesson
Phaisane Somsith, Grace Baptist Church, Dallas, Texas

Facilitator for the LAOTIAN TEAM
Joe Haag, Associate Director, Christian Life Commission, Baptist General Convention of Texas

Patty Lane, Director, Office of Intercultural Initiatives, Baptist General Convention of Texas
Nelda P. Williams, Facilitators Coordinator and Manager, Curriculum Development Office

## ບົດແນະນຳຄຣູສອນ

## ບົດຮຽນທີ 1

## ພຣະເຢຊູສອນຊີວິດປະຈຳວັນ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ມັດທາຍ 5:1-16

ຂໍ້ພຣະຄັມທັງຫມົດສຳລັບບົດຮຽນນີ້: ມັດທາຍ 5:1-16

ຈຸດສຳຄັນຂອງບົດຮຽນນີ້: ເພື່ອໃຫ້ເຫັນຄວາມສຳຄັນຂອງຊີວິດ

ຄຳຖາມເພື່ອການສຳຣວດ: ເຮົາຄວນຈະມີຊີວິດຢ່າງໃດຈຶ່ງຈະຖືກຕ້ອງ?

ຈຸດປະສົງຂອງບົດຮຽນນີ້: ເພື່ອສຳຣວດເບິ່ງຊີວິດວ່າເຮົາມີຫຍັງດີກວ່າຄົນທັມະດາສາມັນ

ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂື້ນແຕ່ລະວັນໆ.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມ

### ຄຳນຳ

ການໄປມາຫາສູ່ກັນນັ້ນເປັນກິດທຳມະດາຂອງສັງຄົມມະນຸດ, ເມື່ອເວົ້າເຖິງສັງຄົມແລ້ວມະນຸດເຮົາກໍມີຫລາຍສັງຄົມຊັ້ນ. ຫາກເຮົາໄປຢາມເພື່ອນໃນສັງຄົມໃດ ເພື່ອນຂອງເຮົາກໍຈະເອົາສິ່ງທີ່ລາວມັກມາສູ່ເຮົາ. ສົມມຸດວ່າເຮົາໄປຢາມຄົນຊອກດື່ມແນ່ນອນເພິ່ນຈະໄປຊອກເຄື່ອງດື່ມມາເມື່ອເຮົາໄປຮອດ, ຫລືຫາກເຮົາໄປຢາມເພື່ອນທີ່ມັກຫລິ້ນກິລາລາວກໍຈະຊວນເຮົາຫລິ້ນກິລາ, ຫາກເຮົາໄປ ຢາມເພື່ອນທີ່ເປັນນັກດົນຕຣີລາວກໍຈະຊວນເຮົາຮ້ອງເພງ. ໃນພຣະຄັມພີທີ່ເຮົາຈະເວົ້າກັນແມ່ນຊົນຊາດຍິວພາກັນມາຫາພຣະເຢຊູ ພຣະອົງສັ່ງສອນເຣື່ອງສັນຕິສຸກ ແລະເວົ້າເຣື່ອງສວັນສູ່ເຂົາຟັງດ້ວຍວ່າພຣະອົງຊົງເປັນພຣະເຈົ້າແຫ່ງສັນຕິສຸກທີ່ສະເດັດມາຈາກສວັນຈຶ່ງເວົ້າເຣື່ອງສວັນໄດ້ຢ່າງລະອຽດ.

1. ຂໍໃຫ້ຜູ້ນຶ່ງອ່ານ ມັດທາຍ 5:1-2 ຄຳເທສນາທີ່ຈ້າຍພູ
   - ກ. ຊົງຂຶ້ນໄປເທິງພູເພື່ອຄົນຈະເຫັນ ແລະໄດ້ຍິນພຣະອົງ.
   - ຂ. ສາວົກເຝົ້າຢູ່ໃກ້ເພື່ອຮັບໃຊ້, ແລະຮຽນຮູ້ຢ່າງໃກ້ຊິດ ແລ້ວເອົາໄປປະຕິບັດ.
   - ຄ. ພຣະອົງຊົງນັ່ງສອນພຣະທັມ,ບໍ່ໄດ້ຢືນສອນ. ພວກຟາຣີຊາຍກໍນັ່ງເທສນາໃນສມັຍນັ້ນ.

໒. ຂໍໃຫ້ຜູ້ນຶ່ງອ່ານ ມັດທາຍ 5:3--12 ຍອດຂອງຄວາມສຸກ
   - ກ. ພຣະອົງຊົງສອນຄວາມສຸກ 8 ຢ່າງ
   - ຂ. ການຢູ່ກິນຢ່າງຄຣິສຕຽນເປັນການຍາກທີ່ຄົນທຳມະດາສາມັນຈະເຂົ້າໃຈ.
   - ຄ. ເປັນຄຣິສຕຽນສົມຄວນມີຊີວິດຕາມຄວາມສຸກທັງ 8 ຢ່າງນັ້ນຈຶ່ງຈະເປັນທີ່ພໍພຣະທັຍພຣະເຈົ້າ.

ງ. ຄຣິສຕຽນຈຳຕ້ອງຮຽນເປັນຄົນອົດແລະທົນສເມີ.

3. <u>ຂໍໃຫ້ຜູ້ນຶ່ງອ່ານ ມັດທາຍ 5: 13-16</u>

ກ. ເກືອ: ເປັນເມັດນ້ອຍ, ຂາວ, ແລະເຄັມ. ຄຣິສຕຽນເປັນເຫມືອນເກືອ.

ຂ. ຄວາມສະວ່າງ: ຊີວິດແຕ່ງຕັ້ງຄຣິສຕຽນເປັນແສງສະວ່າງຂອງໂລກ.

ຄ. ເມືອງທີ່ຕັ້ງເທິງພູ (ພວກເຈົ້ານາຍ, ຜູ້ມີອຳນາດ) ບໍ່ມີອຳນາດໃດຕ້ານແສງສະວ່າງໄດ້.

ງ. ຫາກຄຣິສຕຽນຢູ່ເພື່ອພຣະຄຣິດກໍເປັນຄືແສງສະວ່າງທີ່ສ່ອງແຈ້ງເຖິງຟ້າເມື່ອບໍ່ມີພູມາບັງລັບໄວ້.

ຈ. ທ່ານເທົ່ານັ້ນທີ່ສາມາດບັງແສງສະວ່າງຂອງທ່ານເອງໄດ້ຄື:

1. ເມື່ອເຖິງເວລາປະກາດຂ່າວປະເສີດ, ແຕ່ທ່ານບໍ່ປະກາດ.
2. ທ່ານເຮັດໄປຕາມສັງຄົມໂລກ.
3. ທ່ານປະຕິເສດພຣະເຢຊູຍາມຄັບຂັນ.
4. ທ່ານປ່ອຍໃຫ້ຄວາມບາບຄອບງຳຕົນເອງ.
5. ທ່ານບໍ່ມີຄວາມສາມາດເວົ້າເຣື່ອງຄວາມສະວ່າງຈາກພຣະເຈົ້າໃຫ້ຜູ້ອື່ນຟັງ.
6. ທ່ານເນີນເສີຽຕໍ່ຄົນພາຍນອກ.
7. ທ່ານບໍ່ເອົາໃຈໃສ່ແຂກຄົນທີ່ມາຢ້ຽມຢາມໂບດ ຫລືກຽດຄ້ານໃນວຽກງານຂອງພຣະເຈົ້າ.
8.ທ່ານບໍ່ມີຊີວິດເຫມາະສົມກັບຄົນຢູ່ຝ່າຍຄວາມສະວ່າງ.

<u>ຄຳຖາມ:</u>

1. ພຣະເຢຊູມີພຣະປະສົງໃຫ້ທ່ານໄດ້ຮັບຄວາມສຸກສຸດຍອດຂອງຊີວິດ ທ່ານໄດ້ຍິນພຣະອົງຢ່າງໃດ? ?

2. ຄວາມສຸກທີ່ພຣະອົງຊົງກ່າວມາມີຈັກຢ່າງທີ່ທ່ານໄດ້ຍິນໃນວັນນີ້?

3. ໃນຈຳນວນ 8 ຢ່າງທີ່ພຣະອົງຊົງສອນນັ້ນທ່ານມີສິ່ງໃດແດ່ແລ້ວ? ແລະຍັງຂາດອັນໃດແດ່?

4. ສິ່ງທີ່ຂາດນັ້ນທ່ານຢາກໄດ້ມັນບໍ່? ເຮັດແນວໃດຈຶ່ງຈະໄດ້?

5. ທ່ານເປັນເກືອແລະຄວາມສະວ່າງແກ່ໂລກຢ່າງໃດ?

ສ.ຈ. ທູນພັນ ວົງສຸຣິດທ໌

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນບົດທີ 2
# ຄວາມໝາຍໃໝ່ຈາກຄຳສອນເດີມ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ມັດທາຍ 5:17-48
ຂໍ້ພຣະຄັມພີສຳລັບສຳລັບເບື້ອງຫຼັງ: ມັດທາຍ 5:17-48
ຈຸດສຳຄັນຂອງບົດຮຽນນີ້: ພຣະເຢຊູຊົງເອີ້ນໃຫ້ມີຊີວິດທີ່ດີ, ຊີວິດຊຶ່ງເກີດມາຈາກຈິດໃຈແລະຖືກຕ້ອງກັບຄຸນຄ່າ; ແທນທີ່ຈະເປັນຊີວິດທີ່ດີພຽງຕໍ່ໜ້າ, ຊີວິດຊຶ່ງເກີດໂດຍການບັງຄັບຈາກກົດຣະບຽບ.

ຄຳຖາມເພື່ອການສຳຣວດ: ຄຸນຄວາມດີທີ່ແທ້ເກີດມາຈາກໃສ ແລະຈະສແດງອອກໂດຍວິທີໃດ?
ຈຸດປະສົງຂອງບົດຮຽນນີ້: ເພື່ອອະທິບາຍວິທີທີ່ພວກເຮົາສາມາດຮຽນຮູ້ການດຳເນີນຊີວິດຕາມວິທີທາງຂອງພຣະເຢຊູຢ່າງຄົບບໍຣິບູນ.

## ແຜນສຳລັບການສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ຂຽນຄຳຖາມຕໍ່ໄປນີ້ໃສ່ກະດານ: ຖ້າໃຫ້ທ່ານໃຊ້ຄຳເວົ້າສາມຄຳເພື່ອອະທິບາຍຄວາມສັມພັນອັນດີເລີດໃນຊີວິດທ່ານ, ທ່ານຈະເວົ້າຫຍັງແດ່? ໃນຂະນະທີ່ນັກຮຽນມາເຖິງຫ້ອງຮຽນ, ໃຫ້ນັກຮຽນຈັບກຸ່ມກັນ ກຸ່ມລະສອງຄົນເພື່ອພິຈາຣະນາຫາຄຳຕອບ. ໃຫ້ບາງຄົນແບ່ງປັນຜົນຂອງການສົນທະນາກັບຫ້ອງຮຽນ. ຖ້າເຫັນວ່າມີຄຳເວົ້າຄຳໃດທີ່ຫລາຍໆຄົນໃຊ້, ໃຫ້ຂຽນຄຳເວົ້າເຫລົ່ານັ້ນໃສ່ກະດານ. ຫລັງຈາກນັ້ນໃຫ້ແນະນຳບົດຮຽນສຳລັບມື້ນີ້ໂດຍການອ່ານ ຈຸດປະສົງຂອງບົດຮຽນນີ້ ໃຫ້ທຸກຄົນຟັງ.

### ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

2. ຕຽມອະທິບາຍບົດຮຽນໃນຫົວຂໍ້ ພຣະບັດຍັດແລະຜູ້ປະກາດພຣະທັມ ໂດຍໃຊ້ຄຳອະທິບາຍບົດຮຽນຊ່ວຍ. ຂຽນຊື່ກຸ່ມທີ່ພຣະທັມຕອນນີ້ເວົ້າເຖິງໃສ່ກະດານ ຕິດຕາມດ້ວຍຄຳອະທິບາຍ. ເບິ່ງຕົວຢ່າງຕໍ່ໄປນີ້:

ກ. ພວກຟາຣີຊາຍ----------- ເຊື່ອວ່າພຣະບັນຍັດຄືກົດທີ່ຈະຢັ້ງຢືນວ່າສິ່ງໃດຖືກແລະສິ່ງໃດຜິດ
ຂ. ພວກຕໍ່ຕ້ານພຣະບັນຍັດ----- "ຕໍ່ສູ້ກົດ" ໃຊ້ຊີວິດຄ້າຍກັບວ່າພຣະບັນຍັດບໍ່ມີ.
ຄ. ພຣະເຢຊູ--------------- ມາເຮັດໃຫ້ພຣະບັນຍັດສຳເຣັດຄົບຖ້ວນ

3. ອະທິບາຍຣະບົບການສອນຂອງພຣະເຢຊູຊຶ່ງແບ່ງອອກເປັນສາມພາກ; ໃຊ້ຄຳອະທິບາຍໃນບົດຮຽນໃນຫົວຂໍ້ "ທ່ານທັງຫລາຍໄດ້ຍິນ...ແຕ່ເຮົາບອກທ່ານວ່າ" ເພື່ອຊ່ວຍເປັນຕົວຢ່າງ. ຊ່ວຍໃຫ້ທຸກຄົນຮູ້ວ່າ ພຣະເຢຊູຄືຈຸດສຳຄັນໃນເຈຕນາຂອງພຣະບັນຍັດ.

4. ເບິ່ງບົດຮຽນພາກຕໍ່ໄປໃນຫົວຂໍ້ "ຄຳກ່າວຫົກຢ່າງ (5:21-48)." ແບ່ງນັກຮຽນອອກເປັນຫົກກຸ່ມ; ແຕ່ລະກຸ່ມໄປຄົ້ນຄວ້າເບິ່ງຄຳສອນຂອງພຣະເຢຊູ; ແຕ່ລະກຸ່ມໃຫ້ເຮັດນຶ່ງຫົວຂໍ້ (ຄົນນຶ່ງກໍສາມາດເອີ້ນວ່າກຸ່ມໄດ້, ຖ້າຄົນບໍ່ພໍ).

ໃຫ້ເວລາ 15 ນາທີ; ແຕ່ລະກຸ່ມສາມາດໃຊ້ພຣະຄັມພີ ແລະຄຳອະທິບາຍໃນບົດຮຽນ, ໃຊ້ລະບົບການສອນຂອງພຣະເຢຊູ (ຖ້າຕ້ອງການ) ແລະໃຊ້ຄວາມຄິດສ່ວນຕົວເພີ່ມເຕີມ. ຫລັງຈາກຈົບແລ້ວໃຫ້ແຕ່ລະກຸ່ມລາຍງານຜົນ.

<u>ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

5. ໃຊ້ຄຳຖາມໃນຕອນທ້າຍຂອງບົດຮຽນ:

- ທ່ານຈະສລຸບຄຳສອນຂອງພຣະເຢຊູເຣື່ອງພຣະບັດຍັດ ໂດຍເວົ້າເປັນຄວາມເວົ້າຂອງທ່ານເອງແລະບໍ່ໃຫ້ຍາວເກີນກວ່ານຶ່ງແຖວບັນທັດໄດ້ວິທີໃດ? (ຄຳຕອບ--ພຣະເຢຊູບໍ່ໄດ້ຊົງມາເພື່ອທຳລາຍພຣະບັດຍັດແຕ່ເພື່ອໃຫ້ບັນຍັດເຫລົ່ານັ້ນສຳເຣັດບໍຣິບູນ)
- ການເຂົ້າໃຈເນື້ອຫາໃນຄຳສອນນີ້ຈະຊ່ວຍຄວາມສັມພັນຣະຫວ່າງຕົວທ່ານແລະຫົວໜ້າງານໄດ້ວິທີໃດ?

6. ເຊີນນັກຮຽນອອກຄຳເຫັນໃນເຣື່ອງຕໍ່ໄປນີ້:

ຫລາຍປີທີ່ຜ່ານມາ ທ້າວໂຈ ລາຍງານພາສີລາຍໄດ້ໂດຍບໍ່ລາຍງານທຸກຢ່າງ. ໃນທີ່ສຸດເຈົ້າໜ້າທີ່ກໍນຳທັນ; ທ້າວໂຈໄດ້ຖືກສານພິພາກສາໃຫ້ຈຳຄຸກນຶ່ງປີໃນຖານສໍ້ໂກງຣັຖບານ. ທ້າວໂຈຈົ່ມວ່າກັບທະນາຍຄວາມຂອງລາວວ່າ: <u>ກົດໝາຍນັ້ນມັນຜິດ ແລະບໍ່ຍຸດຕິທັມ! ບໍ່ມີໃຜດອກທີ່ຈະສາມາດເປັນຄົນສັດຊື່ໄດ້ຕລອດໄປ!</u>

* ເຊີນນັກຮຽນບາງຄົນໃຫ້ສະແດງຄວາມເຫັນໂດຍອີງໃສ່ຄຳສອນໃນບົດຮຽນນີ້.

7. ປິດການຮຽນດ້ວຍການອະທິຖານ; ຂອບພຣະຄຸນພຣະເຈົ້າສຳລັບຄຳແນະນຳໃນພຣະບັດຍັດ.
ຂໍໃຫ້ພຣະເຈົ້າຊົງ
ຊ່ວຍພວກເຮົາໄດ້ດຳເນີນຊີວິດຕາມຫລັກຄວາມເຊື່ອ ແລະຕາມຄຸນຄ່າແລະເຈຕນາຂອງພຣະບັນຍັດທີ່ພຣະເຢຊູໄດ້ອະທິບາຍໃນບົດຮຽນນີ້, ແລະຢ່າໃຫ້ພວກເຮົາພຽງແຕ່ເຮັດຕາມກົດ.

ສ.ຈ. ສີດາ ຄານ

# ຄຳແນະນຳສຳລັບຄຣູ
# ບົດຮຽນບົດທີ 3
# ເມື່ອພຣະເຈົ້າເປັນຜູ້ຟັງພຽງຜູ້ດຽວ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ມັດທາຍ 6:1-18
ຂໍ້ພຣະຄັມພີສຳລັບສຳລັບເບື້ອງຫຼັງ: ມັດທາຍ 6:1-18
ຈຸດສຳຄັນຂອງບົດຮຽນນີ້: ພຣະເຢຊູຊົງເອີ້ນຫາປະເພນີທາງສາສນາທີ່ສແວງຫາພຣະເຈົ້າ ແລະແນວທາງຂອງພຣະອົງ ແທນທີ່ຈະສແວງຫາການສັຣເສີນແລະການເຫັນພ້ອມຈາກມະນຸດດ້ວຍກັນ.
ຄຳຖາມເພື່ອການສຳຣວດ: ທ່ານຈະເປັນຜູ້ເຊື່ອຖືສາສນາປະເພດໃດຖ້າມີພຣະເຈົ້າອົງດຽວເປັນຜູ້ເບິ່ງທ່ານ?
ຈຸດປະສົງຂອງບົດຮຽນນີ້: ເພື່ອສຳຣວດເບິ່ງການປະຕິບັດທາງສາສນາຂອງຂ້າພະເຈົ້າເມື່ອປຽບໃສ່ຄຳສອນທີ່ອົງພຣະເຢຊູຊົງໃຫ້ໄວ້ໃນຕົວຢ່າງສາມເຣື່ອງໃນບົດຮຽນນີ້.

## ແຜນສຳລັບການສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ຂຽນຄຳຖາມນີ້ໃສ່ກະດານ ຫລືໃສ່ໂປສເຕີ້: ຂ້ອຍຈະສແດງຄວາມເຊື່ອອອກວິທີໃດ? ຫລັງຈາກນັກຮຽນນັ່ງລົງແລ້ວໃຫ້ເຊີນທຸກຄົນເບິ່ງຄຳຖາມນັ້ນ ແລະເພີ່ມຄຳຖາມຕໍ່ໄປນີ້: ທ່ານຈື່ໄດ້ບໍ່ວ່າມີຫຍັງແດ່ທີ່ທ່ານໄດ້ເຮັດໃນອາທິດທີ່ຜ່ານມາທີ່ເຫັນວ່າເປັນການສແດງຄວາມເຊື່ອໃຫ້ກັບໃຜຜູ້ນຶ່ງ?

2. ຖາມ: ເວລາພວກເຮົາອ້ອນວອນ, ແມ່ນໃຜເປັນຜູ້ຟັງ? ທ່ານຄິດວ່າຫລາຍຄົນມັກຈະອ້ອນວອນແບບຕ່າງໆກັນ ເວລາເຂົາເຈົ້າຢູ່ຜູ້ດຽວ ແລະເວລາຢູ່ໃນທີ່ຊຸມຊົນບໍ່? ທ່ານຄິດວ່າເປັນເພາະຫຍັງ?

3. ບອກວ່າຈຸດປະສົງຂອງບົດຮຽນໃນມື້ນີ້ແມ່ນເພື່ອສຳລວດເບິ່ງການປະຕິບັດທາງສາສນາ ໂດຍປຽບໃສ່ຄຳສອນຂອງພຣະເຢຊູໃນສາມຫົວເຣື່ອງຂອງຊີວິດຄຣິສຕຽນ.

### ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

4. ໃຫ້ນັກຮຽນຜູ້ນຶ່ງອ່ານມັດທາຍ 6:1. ໃຊ້ບົດຮຽນໃນຫົວຂໍ້ "ຖ້ອນຄຳໂດຍທົ່ວໄປ" ເພື່ອອະທິບາຍເຣື່ອງລາວຕໍ່ໄປນີ້:

   - ພຣະເຢຊູມີເຈຕນາແນວໃດເມື່ອພຣະອົງເລີ້ມຕົ້ນຄຳສອນດ້ວຍຂໍ້ຄວາມທີ່ໄປໃນທາງລົບ
   - ເປັນຫຍັງພຣະເຢຊູຈິ່ງບອກວ່າການປະພຶດໃນທີ່ຊຸມຊົນນັ້ນສຳຄັນ
   - ຄຳຖາມອັນແທ້ຈິງກ່ຽວກັບການສແດງຄວາມເຊື່ອໃນທີ່ຊຸມຊົນ

5. ໃຫ້ຜູ້ນຶ່ງອະທິບາຍຄວາມໝາຍຂອງຄຳວ່າ "ຂອງທານ." ການໃຫ້ທານແມ່ນວິທີດູແລຄົນທຸກຍາກໃນສມັຍນັ້ນ. ອ່ານພຣະທັມຕໍ່ໄປນີ້ເພື່ອການເຂົ້າໃຈເບື້ອງຫລັງ: ລະບຽບຂອງພວກເລວີ 19:9-10; ກິຈການ 6:1-6; 1 ຕີໂມທຽວ 5:1-16. ຫລັງຈາກອ່ານແລ້ວໃຫ້ນັກຮຽນບາງຄົນອະທິບາຍວິທີໃຫ້ທານ ຫລືໃຫ້ການຊ່ວຍເຫລືອ.

6. ໃຫ້ຕົວຢ່າງໃນຊີວິດປັດຈຸບັນຈາກຂໍ້ຄວາມທີ່ວ່າ, "ເມື່ອທ່ານໃຫ້ທານຢ່າໃຫ້ມືຊ້າຍຮູ້ການທີ່ມືຂວາກໍາລັງເຮັດ" (ມັດທາຍ 6:3). ຕົວຢ່າງ: ຈົກເງິນຈາກຖົງແລ້ວໃຫ້ທານໂດຍບໍ່ຕ້ອງນັບ. ທ່ານອາດຈະຄິດໄດ້ຕົວຢ່າງອື່ນໆ.

7. ຂຽນບົດອ້ອນວອນໃນ 6:9-13 ໃສ່ໂປສເຕີ້. ຂີດກ້ອງຄໍາວ່າ ພຣະບິດາ, ພຣະຣາຊອານາຈັກພຣະອົງ, ຂໍຊົງໂຜດປະທານ, ຂໍຊົງໂຜດຍົກໂທດ, ຂໍຢ່າພາຂ້າພຣະອົງເຂົ້າໄປໃນການທົດລອງ. ສົນທະນາຈຸດສໍາຄັນຕ່າງໆແບບສັ້ນໆ ໂດຍໃຊ້ຄໍາອະທິບາຍໃນບົດຮຽນຊ່ວຍ.

8. ບອກນັກຮຽນວ່າ, ໃນກຸ່ມບັບຕິສພວກເຮົາມັກເວົ້າເຣື່ອງການຖວາຍ ຫລືການອ້ອນວອນຫລາຍກວ່າເຣື່ອງການຖືສິນອົດອາຫານ. ອ່ານມັດທາຍ 6:17-18. ຖາມ: ທ່ານເຄີຍຖືສິນອົດອາຫານບໍ່? ທ່ານເວົ້າເຣື່ອງປະສົບການໃຫ້ຫ້ອງຮຽນຟັງໄດ້ບໍ່?

<u>ນໍາບົດຮຽນໄປໃຊ້ກັບຊີວິດ (ໃຊ້ເວລາ 15 ນາທີ)</u>

9. ເຕືອນທຸກຄົນ: ພຣະເຢຊູຊົງສອນວ່າຜູ້ທີ່ຖວາຍ, ອ້ອນວອນ, ແລະອົດອາຫານເພື່ອອວດຄົນອື່ນນັ້ນໄດ້ຮັບບໍາເໜັດແລ້ວ. ຖາມ: ແມ່ນຫຍັງຄືບໍາເໜັດ? ໃນສາມເຣື່ອງນີ້ພຣະເຢຊູຊົງບອກວ່າຜູ້ທີ່ຖວາຍ,ອ້ອນວອນ,ແລະອົດອາຫານແບບລັບລີ້ກໍຖວາຍກຽດແດ່ພຣະເຈົ້າ ແລະຈະໄດ້ຮັບບໍາເໜັດຈາກພຣະອົງ. ທ່ານຄິດວ່າບໍາເໜັດນັ້ນແມ່ນຫຍັງ?

10. ເຊີນທຸກຄົນໃຫ້ພິຈາຣະນາຕົວເອງຢ່າງງຽບໆວ່າ: ການປະຕິບັດຂອງຂ້ອຍເຣື່ອງການຖວາຍ, ການອ້ອນວອນ, ແລະການຖືສິນອົດອາຫານນັ້ນຖືກຕ້ອງກັບຄໍາສອນຂອງພຣະເຢຊູບໍ່? ມີຫຍັງແດ່ທີ່ຂ້ອຍຄວນຈະເອົາໃຈໃສ່ໃຫ້ຫລາຍກວ່າເກົ່າ?

11. ນໍາພານັກຮຽນອະທິຖານຕາມແບບໃນບົດຮຽນນີ້ ເພື່ອປິດການສຶກສາພຣະທັມໃນຕອນນີ້.

ສ.ຈ. ສົດມີ ຄານ

# ບົດແນະນຳການສິດສອນ
# ບົດຮຽນທີ 4
# ຊັບສົມບັດອັນຕລອດໄປ

---

ຂໍ້ພຣະຄຳພີສຳລັບບົດຮຽນ: ມັດທາຍ 6:19-34

ຂໍ້ພຣະຄຳພີສຳລັບເບື້ອງຫລັງ: ມັດທາຍ 6:19-34

ຈຸດສຳຄັນຂອງບົດຮຽນນີ້: ພຣະເຢຊູຊົງຮຽກຮ້ອງໃຫ້ພວກເຮົາໄວ້ວາງໃຈໃນພຣະເຈົ້າ ແລະໃຫ້ພວກເຮົາເບິ່ງທິດທາງຂອງພຣະອົງນັ້ນມີຄຸນຄ່າຫລາຍຂຶ້ນຈິນກວ່າພວກເຮົາເນັ້ນຫນັກແລະກັງວົນກັບວັດຖຸສິ່ງຂອງເລັກຫນ້ອຍຖອຍລົງ.

ຄຳຖາມເພື່ອການສຳຣວດ: ສະນັ້ນແມ່ນອັນໃດ - ເງິນຫລືພຣະເຈົ້າ?

ຈຸດປະສົງຂອງບົດຮຽນນີ້: ໃຫ້ໄຈ້ແຍກເບິ່ງອັນໃດສຳຄັນແທ້- ຂ້າພະເຈົ້າຈະມອບຊີວິດຂອງຂ້າພະເຈົ້າໄວ້ກັບວັດຖຸສິ່ງຂອງ ເຊິ່ງເປັນທາງກົງກັນຂ້າມກັບທິດທາງຂອງພຣະເຈົ້າ ຫຼື ຂ້າພະເຈົ້າຈະໄວ້ວາງໃຈໃນພຣະເຈົ້າແລະເບິ່ງທິດທາງຂອງພຣະອົງນັ້ນມີຄຸນຄ່າຫລາຍກວ່າ.

## ແຜນການສິດສອນ

### ຊີວິດສະພາບຕົວຈິງ

1. ກ່ອນຫ້ອງຮຽນຈະເລີ່ມໃຫ້ເອົາເງິນປອມຂອງເດັກນ້ອຍຫລິ້ນ ຫລືເງິນແທ້ກໍໄດ້ (ໃບນ້ອຍໆ) ແລ້ວເອົາໄປຕິດຢູ່ຕາມຝາຂອງຫ້ອງຮຽນ, ເອົາໃບປິວໂຄສະນາກ່ຽວກັບເຣື່ອງຄ້າຂາຍວິທີໃດຈຶ່ງຈະໄດ້ເປັນເສດຖີເງິນລ້ານ. ໃບໂຄສະນາຂາຍຣົດ, ໃບໂຄສະນາຂາຍເຮືອນ, ໃບປິວແນວໃດທີ່ເວົ້າກ່ຽວກັບເຣື່ອງເງິນແລະວັດຖຸສິ່ງຂອງມາຕິດ.

2. ໃຫ້ຂຽນຂໍ້ຄຳຖາມດັ່ງກ່າວໃສ່ກະດານ: ທ່ານຍອມເຮັດອັນໃດແດ່ເພື່ອເງິນ $1,000? ເພື່ອເງິນ $1,000,000? ເລີ່ມເປີດຫ້ອງຮຽນໂດຍກ່າວເຖິງລາຍການຂອງໂທຣະທັດທີ່ມີການແຂ່ງຂັນກັນຊິງເອົາລາງວັນເປັນຈຳນວນເງິນຫລວງຫລາຍ ມີການສ່ຽງພັນອັນຕຣາຍ ມີການເລືອກເອົາເງິນນຶ່ງລ້ານຫລືຈະເອົາຄູ່ສົມຣົດ ແລະອື່ນໆ. ໃຫ້ສະມາຊິກຫ້ອງຈັບຄູ່ກັນ ແລ້ວແບ່ງປັນຄວາມຄິດເຫັນເປັນຄຳຕອບຈາກຂໍ້ຄຳຖາມຂ້າງເທິງນັ້ນ. ຫລັງຈາກນັ້ນໃຫ້ເອົາມາເລົ່າສູ່ຫມູ່ໃນຫ້ອງຟັງ.

### ສຶກສາບົດຮຽນ

3. ໃຫ້ອ່ານຈຸດປະສົງຂອງບົດຮຽນນີ້ໃຫ້ທຸກຄົນຟັງ: ໃຫ້ໄຈ້ແຍກເບິ່ງອັນໃດສຳຄັນແທ້- ຂ້າພະເຈົ້າຈະມອບຊີວິດຂອງຂ້າພະເຈົ້າໄວ້ກັບວັດຖຸສິ່ງຂອງ ເຊິ່ງເປັນທາງກົງກັນຂ້າມກັບທິດທາງຂອງພຣະເຈົ້າ ຫຼື ຂ້າພະເຈົ້າຈະໄວ້ວາງໃຈໃນພຣະເຈົ້າແລະເບິ່ງທິດທາງຂອງພຣະອົງນັ້ນມີຄຸນຄ່າຫລາຍກວ່າ.

4. ໃຫ້ຫາສະມາຊິກຫ້ອງສອງຄົນໄວ້ກ່ອນລ່ວງຫນ້າ ເພື່ອໃຫ້ພວກເຂົາສະແດງລະຄອນສັ້ນ ບົດທີ 1 ແລະບົດທີ 2 ຫລັງຈາກເປີດຫ້ອງຮຽນໃຫ້ພວກເຂົານຳມາສະແດງໃຫ້ສະມາຊິກຫ້ອງເບິ່ງ.

ລະຄອນສັ້ນບົດທີ 1

ສະບາຍດີພີ່ນ້ອງ ຂ້ານ້ອຍຊື່ ເບັນ. ເອີ້ນຂ້ານ້ອຍວ່າ ທ້າວເບັນກໍໄດ້ ຂ້ານ້ອຍອົດບໍ່ໄດ້ຢາກໃຫ້ຮອດມື້ວັນອາທິດ ເພື່ອຂ້ານ້ອຍຈະໄດ້ນໍາເອົາຣົດໃຫມ່ເປີດຫລັງຄາມາໃຫ້ພີ່ນ້ອງເບິ່ງ. ຫລັງຈາກຫ້ອງຮຽນແລ້ວ ຂ້ານ້ອຍຈະໃຫ້ແຕ່ລະຄົນຂຶ້ນຂີ່ນໍາ.

ຂ້ານ້ອຍໄດ້ຊື້ຣົດໃຫມ່ປີກາຍນີ້. ຫລັງຈາກຣັຖບານໄດ້ສົ່ງເງິນເສັຽພາສີສ່ວນນຶ່ງຄືນໃຫ້ຂ້ານ້ອຍ ແມ່ນວ່າອົດບໍ່ໄດ້ແທ້ໆ ຂ້ານ້ອຍເອົາໄປວາງເປັນເງິນມັດຈໍາສໍາລັບຣົດໃຫມ່ທັນທີ. ຂ້ານ້ອຍຍັບຍັ້ງບໍ່ໄດ້ ທີ່ຈະເຮັດໃສ່ຕົວເອງກັບຣົດຄັນນີ້. ຂ້ານ້ອຍທໍາງານຫນັກເພື່ອຈະໄດ້ເງິນມາ-ເກີນເວລາທັມດາສິບຊົ່ວໂມງອາທິດທີ່ຜ່ານມາ. ຂາດໂບດ ແລະບໍ່ໄດ້ໄປຮ່ວມພາເຂົ້າກັບອີ່ພໍ່ກັບອີ່ແມ່ ແຕ່ເມື່ອຫລຽວເບິ່ງຣົດຄັນນີ້ແລ້ວ-ມັນຄັກແທ້-ຂາດກໍຊ່າງເທາະ ແລະຜູ້ສາວກໍຫລຽວເບິ່ງເປັນສາຍໆ.

ພໍ່ແລະແມ່ຢາກໃຫ້ເອົາເງິນສ່ວນນັ້ນໄປຈ່າຍຫນີ້ສິນທີ່ຄ້າງຄາຢູ່ ຫລືບໍ່ກໍສະສົມໄວ້ ແຕ່ຂ້ານ້ອຍຄິດວ່າເຣື່ອງຫນີ້ສິນນີ້ ໃຜກໍມີຢູ່ຄືກັນທັງນັ້ນ. ພວກເພິ່ນຢາກໃຫ້ສະສົມໄວ້ສໍາລັບອະນາຄົດ-ເພື່ອໄວ້ສ້າງຄອບສ້າງຄົວ. ເມື່ອມັນຮອດຍາມຂ້ານ້ອຍຈຶ່ງຈະເຮັດວຽກເພີ້ມຂຶ້ນ. ແຕ່ດຽວນີ້ ຂໍໃຫ້ໄດ້ໃນສິ່ງທີ່ <u>ຂ້ານ້ອຍ</u> ຢາກໄດ້ເສັຽກ່ອນ ແລ້ວຈຶ່ງຄ່ອຍເວົ້າກັນທີຫລັງ.

ຂ້ານ້ອຍຮູ້ສຶກແກ່ໃຈວ່າຂ້ານ້ອຍມີຄວາມຜິດທີ່ບໍ່ໄດ້ຖວາຍນຶ່ງສ່ວນສິບໃຫ້ພຣະເຈົ້າ ຫລືເດືອນນີ້ບໍ່ໄດ້ຖວາຍເລີຍແທ້ຈິງແລ້ວ ຂ້ານ້ອຍບໍ່ໄດ້ໃຫ້ມານີ້ຫລາຍເດືອນແລ້ວຕີ. ແຕ່ພຣະເຈົ້າຊົງຮັກພວກເຮົາແລະພຣະອົງຢາກໃຫ້ພວກເຮົາມີແຕ່ສິ່ງດີໆ ບໍ່ແມ່ນບໍ? ຂ້ານ້ອຍບໍ່ໄດ້ທໍາຮ້າຍຜູ້ໃດ ບໍ່ແມ່ນບໍ? ນຶ່ງສ່ວນສິບທີ່ຂ້ານ້ອຍຈະໃຫ້ໄປນັ້ນມາຄິດເບິ່ງແລ້ວມັນກໍບໍ່ຫລາຍ ມັນກໍຄົງຈະຊ່ອຍຫຍັງບໍ່ໄດ້ດອກ.

ໃຫ້ແຍກຫ້ອງຮຽນເປັນສາມກຸ່ມ. <u>ໃຫ້ແຕ່ລະກຸ່ມເລືອກເອົາຫົວຂໍ້ນຶ່ງຈາກບົດຮຽນໃນຄູ່ມືຂອງສະມາຊິກຫ້ອງໃນພຣະທັມ ມັດທາຍ 6:19-24 : "ພາບພົດຂອງຊັບສົມບັດ" (6:19-21), "ເບິ່ງແລ້ວຖືກຕາ" (6:22-23), "ຄວາມຈົງຮັກພັກດີຖືກແບ່ງແຍກ" (6:24) ໃຫ້ຈັດຕຽມຄໍາຕອບຂອງພຣະເຢຊູຈະຕອບທ້າວເບັນ.</u> ໃຫ້ເລືອກເອົາຜູ້ນຶ່ງເປັນຜູ້ເວົ້າຕາງຫນ້າຂອງແຕ່ລະກຸ່ມ ໃຫ້ມາສເນີຂໍ້ຄວາມທີ່ຈະມາກ່າວຕໍ່ທ້າວເບັນ.

5. ໃຫ້ເອີ້ນເອົາຜູ້ທີສອງມາສະແດງ ລະຄອນສັ້ນບົດທີ 2 ແລະໃຫ້ເຮັດເຫມືອນຂໍ້ທີ 4 ຕ່າງແຕ່ວ່າໃຫ້ເອົາຫົວຂໍ້: <u>"ຊີວິດຖືກປັ່ນປ່ວນ"</u> (6:25-34) ຈາກຄູ່ມືບົດຮຽນຂອງສະມາຊິກຫ້ອງ.

ລະຄອນສັ້ນບົດທີ 2

ສະບາຍດີພີ່ນ້ອງ ຂ້ານ້ອຍຊື່ ລໍແລນ. ຂ້ານ້ອຍສ່າງບໍ່ລຽບລ້ອຍ ຂໍນໍາເດີ. ເບິ່ງຂອບຕາຂອງຂ້ານ້ອຍແມ! ຂ້ານ້ອຍນອນບໍ່ຫລັບຫມົດຄືນ ເພາະວ່າຈວນຈະຮອດວັນກໍານົດແລ້ວ ແຕ່ໃບລາຍງານຍັງບໍ່ແລ້ວ ນາຍຂອງຂ້ານ້ອຍຕ້ອງໃຫ້ມັນແລ້ວ. ທ້າວແຈ໋ກຕ້ອງໄປຫລິ້ນກິລາຫມາກບານຄືນນີ້ ຂ້ານ້ອຍຕ້ອງໄດ້ໄປນໍາລາວ. ແລະນາງແຄໂຣລິນມີລາຍການຄຣິສມາດໃນວັນທ້າຍສັປດານີ້ ພວກຂ້ານ້ອຍໄປເລາະຊື້ເຄື່ອງຫມົດທິດ ແຕ່ບໍ່ໄດ້ຕົວມັກ. ແບບແລະສັດສ່ວນບໍ່ໄດ້ ຖ້າຕົວໃດທີ່ເປີດໃຫ້ເຫັນຄີງຫລາຍຂ້ານ້ອຍບໍ່ຢາກໃຫ້ລາວໃສ່. ຖ້າເຈາະຈົງຫລາຍຢານວ່າຫມູ່ຂອງລາວບໍ່ຍອມຮັບລາວ. ກັບມາເວົ້າເຖິງໃບລາຍງານ ຖ້າຜົນທີ່ອອກມາໄດ້ດີ ຂ້ານ້ອຍອາດຈະຖືກ

ເລື່ອນຊັ້ນ. ຄັນເມື່ອໄດ້ຮັບໜ້າທີ່ການດີ ຢ້ານວ່າຈະຕ້ອງໄດ້ປ່ຽນເຄື່ອງນຸ່ງ. ຄືງຂອງຂ້ານ້ອຍບໍ່ເຂົ້າກັບເຄື່ອງນຸ່ງອີກ. ຂ້ານ້ອຍຕ້ອງລົດຄວາມອ້ວນອີກຢູ່ບໍ ເພື່ອຈະຊ່ອຍໃຫ້ຂ້ານ້ອຍເບິ່ງເຫມືອນວ່າ ໜຸ່ມກວ່າເກົ່າ. ບາງຄັ້ງຂ້ານ້ອຍຄິດວ່າ ບໍ່ຮູ້ວ່າແມ່ນຫຍັງເກີດຂຶ້ນກັບຂ້ານ້ອຍ. ຂ້ານ້ອຍກະວົນກະວາຍຫລາຍຈົນເກີນໄປແລ້ວຕີ້!

ຫລັງຈາກລະຄອນສິ້ນສຸດລົງ, ໃຫ້ເພີ້ມເຕີມບ່ອນໃດທີ່ຂາດຕົກບົກພ່ອງ ຫລືຈຸດສຳຄັນຈາກບົດຮຽນນີ້ ເຊິ່ງທ່ານຄິດວ່າມີຄວາມຈຳເປັນ.

<u>ຫມູນໃຊ້ໃນການກະທຳ</u>

6. ໃຫ້ສລຸບບົດຮຽນໂດຍຢາຍເຈັ້ຽເຊິ່ງມີປໂຍກດັ່ງຕໍ່ໄປນີ້:

ພຣະເຢຊູຊົງກ່າວວ່າ: ຢ່າຮິບໂຮມຊັບສິນບັດໄວ້ສຳລັບຕົນໃນໂລກ, ແຕ່ແທນທີ່ ____________________.

ພຣະເຢຊູຊົງກ່າວວ່າ: ຢ່າກະວົນກະວາຍ, ແຕ່ແທນທີ່ ________________________________________.

ຫລັງຈາກໃຫ້ເວລາພຽງພໍສະມາຊິກຫ້ອງຕື່ມຂໍ້ຄວາມໃສ່ຊ່ອງວ່າງນັ້ນແລ້ວ ບອກຄຳຕອບອັນຖືກຕ້ອງໃຫ້ພວກເຂົາ

7. ໃຫ້ສະມາຊິກຫ້ອງປັ້ນເຈ້ຽໃບນັ້ນ ແລະຂຽນລົງໄປວ່າ <u>ຂ້າພະເຈົ້າຈະຕ້ອງ. . .</u> ເຊິ່ງເປັນຂໍ້ຄວາມທີ່ໄດ້ສະແດງອອກໃຫ້ເຫັນຫລັກທັມທີ່ສາມາດນຳໄປໃຊ້ກັບຊີວິດປະຈຳວັນຂອງພວກເຂົາ.

8. ໃຫ້ອະທິຖານປິດບົດຮຽນ.

ສ.ຈ. ບຸນເຮັ່ງ ພົງປຣະພັນ

# <u>ບົດແນະນຳການສິດສອນ</u>

# <u>ບົດຮຽນທີ 5</u>

# <u>ເລືອກເອົາຊີວິດທີ່ຢູ່ໃຕ້ກົດລະບຽບຂອງພຣະເຈົ້າ</u>

---

<u>ຂໍ້ພຣະຄັມພີສຳລັບບົດຮຽນ:</u> ມັດທາຍ 7:1-27

<u>ຂໍ້ພຣະຄັມພີສຳລັບເບື້ອງຫລັງ:</u> ມັດທາຍ 7:1-27

<u>ຈຸດສຳຄັນຂອງບົດຮຽນນີ້:</u> ໃຊ້ຊີວິດຢູ່ໃຕ້ກົດລະບຽບຂອງພຣະເຈົ້າໄດ້ຮຽກຮ້ອງໃຫ້ພວກເຮົາສະແດງຄວາມຮັກໃຫ້ກັບຄົນອື່ນ ແລະໃຫ້ເພິ່ງພຣະເຈົ້າໃນສິ່ງທີ່ພວກເຮົາຕ້ອງການ ແທນທີ່ຈະເດີນໄປໃນທາງຜິດ.

<u>ຄຳຖາມເພື່ອການສຳຣວດ:</u> ຖ້າພວກເຮົາຕິດຕາມຄຳສອນຂອງພຣະເຢຊູ ແລ້ວຈະມີຄວາມແຕກຕ່າງຢ່າງໃດໃນສາຍສັມພັນລະຫວ່າງພວກເຮົາກັບພຣະເຈົ້າແລະກັບຄົນອື່ນ?

<u>ຈຸດປະສົງຂອງບົດຮຽນນີ້:</u> ການຕັດສິນໃຈຈະນຳຄຳສອນຂອງພຣະເຢຊູມາປະຕິບັດ

## <u>ແຜນການສິດສອນ</u>

### <u>ຊີວິດສະພາບຕົວຈິງ</u>

1. ມີເຣື່ອງລາວຢູ່ວ່າ ຄະນະກັມມະການຊອກຫາຜູ້ຮັບໃຊ້ໄດ້ໄປຊອກຫາແລະສຳພາດຜູ້ນຳທີ່ເຫັນວ່າເຫມາະສົມຈະມາເປັນຜູ້ນຳຢູ່ໃນໂບດຂອງພວກເຂົາ. ຄະນະກັມມະການຊຸດນີ້ນັບວ່າເຮັດດີທີ່ສຸດ ພວກເຂົາສືບຄົ້ນສອບຖາມເບິ່ງເບື້ອງຫລັງຂອງຜູ້ນຳຄົນນັ້ນຢ່າງຖ້ວນຖີ່. ທ້າຍສຸດກໍເລີຍໄດ້ຕົກລົງຮັບເອົາຜູ້ນຳຄົນນັ້ນ. ຫລັງຈາກຮັບເອົາລາວແລ້ວກໍເລີຍພົບວ່າ ລາວໄດ້ກ່າວຕົວະຕໍ່ຄະນະກັມມະການໃນເຣື່ອງການປະພຶດກ່ຽວກັບເຣື່ອງສິນທັມ. ຈະເຮັດຢ່າງໃດກ່ຽວກັບເຣື່ອງນີ້?

   ໃຫ້ຄົນນຶ່ງອ່ານເຣື່ອງລາວຂ້າງເທິງນີ້ສູ່ຄົນໃນຫ້ອງຟັງ. ໃຫ້ນຳເຣື່ອງນີ້ມາສົນທະນາກັນ, "ຄວນຈະເຮັດຢ່າງໃດກ່ຽວກັບເຣື່ອງນີ້?" ໃຫ້ຖາມວ່າ: <u>ທ່ານຈະມີຄວາມຮູ້ສຶກແຕກຕ່າງຢ່າງໃດກ່ຽວກັບເຣື່ອງນີ້ ຖ້າຜູ້ນຳຄົນນັ້ນຫາກເປັນນັກເທດທີ່ມີຊື່ສຽງ ຫລືວ່າ ຖ້າລາວເປັນຍາດພີ່ນ້ອງຂອງທ່ານເອງ?</u>

### <u>ສຶກສາບົດຮຽນ</u>

2. ໃຫ້ກ່າວຕໍ່ສະມາຊິກຫ້ອງວ່າ ວັນນີ້ເປັນວັນສລູບບົດຮຽນຂອງຫ້າອາທິດກ່ຽວກັບການເທສນາຂອງພຣະເຢຊູຢູ່ຈ້າຍພູ. ໃຫ້ເລີ້ມແບ່ງປັນຂໍ້ມູນຂອງບົດຮຽນໃນຫົວເຣື່ອງ "ການຕັດສິນວ່າກ່າວຄົນອື່ນ" ຈາກ<u>ປື້ມບົດຮຽນຂອງສະມາຊິກຫ້ອງ.</u> ຮວບຮວມຂໍ້ຄິດຕ່າງໆໃນເຣືອງການຕັດສິນວ່າກ່າວ ຫລືການສັງເກດການເບິ່ງອັນໃດຖືກແລະອັນໃດຜິດ

3. ໃຫ້ຂຽນຂໍ້ຄວາມດັ່ງຕໍ່ໄປນີ້ຢູ່ເທິງກະດານ ແລະໃຫ້ຂຽນຄຳຕອບຂອງພວກສະມາຊິກຫ້ອງໃສ່ທາງຂ້າງຂອງຂໍ້ຄວາມດັ່ງຕໍ່ໄປນີ້: <u>ການຕັດສິນວ່າກ່າວ, ການສັງເກດການ, ຄວາມເຫມາະສົມ, ການທູນຂໍ, ການຊອກ, ຄວາມເປັນທັມ, ຫນ້າໄຫວ້ຫລັງຫລອກ, ການຮັບຮອງ, ການຍຶດຖືໃນຫລັກທັມ, ການຮັບຮອງວ່າເປັນທີ່ເຊື່ອຖືໄດ້.</u> ໃຫ້ສະມາຊິກຫ້ອງຮຽນຊອກຫາຄຳອື່ນທີ່ມີຄວາມຫມາຍຄ້າຍຄືກັນກັບຂໍ້ຄວາມຢູ່ຂ້າງເທິງນີ້.

4. ຮ້ອງຂໍໃຫ້ຜູ້ນຶ່ງອ່ານພຣະທັມມັດທາຍ 7:1-6 ດັງໆ. ໃຊ້ຂໍ້ມູນຈາກ ປື້ມບົດຮຽນຂອງສະມາຊິກຫ້ອງ ທີ່ມີຫົວຂໍ້ "ການຕັດສິນວ່າກ່າວຄົນອື່ນ." ເປັນການເປີດທາງໃຫ້ນຳມາແບ່ງປັນເຣື່ອງຜົນຂອງການຕັດສິນວ່າກ່າວ. ຮ່ວມທັງຄຳສອນຂອງພຣະເຢຊູກ່ຽວກັບເຣື່ອງຄວາມຮັບຜິດຊອບທັມຂອງຕົນເອງ. ໃຫ້ອະທິບາຍເຖິງເຣື່ອງການຕັດສິນວ່າກ່າວທີ່ເໝາະສົມ ແລະເປັນຫຍັງພວກເຮົາຈຶ່ງຈະຕ້ອງຕັດສິນວ່າກ່າວຕົວຂອງພວກເຮົາເອງເສັຽກ່ອນ. ໃຊ້ເຣື່ອງລາວຕົວຢ່າງຈາກພຣະເຢຊູກ່ຽວກັບເຣື່ອງໝູແລະໝາ ເພື່ອຈະອະທິບາຍເຖິງການເສັຽສະລະແລະໜ້າທີ່ຮັບຜິດຊອບ ຊຶ່ງຕິດຕາມດ້ວຍການຕັດສິນວ່າກ່າວ.ໃຫ້ຕັ້ງຄຳຖາມວ່າ: <u>ການຕັດສິນວ່າກ່າວຢ່າງເໝາະສົມຈະມີຜົນປະໂຍດແກ່ໂບດຢ່າງໃດ? ເປັນຫຍັງຈຶ່ງມີຜົນ ຫລືເປັນຫຍັງຈຶ່ງບໍ່ມີ? ຜູ້ໃດຈະມີຄຸນສົມບັດມາຕັດສິນວ່າກ່າວຢ່າງ "ເໝາະສົມ"? ຜູ້ຮັບໃຊ້ປະຈຳໃນໂບດ?, ຜູ້ອາສາສມັກໃນໂບດ?, ຄຣູສອນໂຮງຮຽນວັນອາທິດ?</u>

5. ໃຫ້ອ່ານພຣະທັມມັດທາຍ 7:7-12 ສູ່ສະມາຊິກໃນຫ້ອງຮຽນຟັງ. ໃຊ້ <u>ບົດຮຽນຂອງສະມາຊິກຫ້ອງຮຽນ</u> ໃນຫົວຂໍ້ "ການຂໍ ການຊອກ ແລະການເຄາະ" ໃຫ້ບົ່ງບອກແຫລ່ງເພື່ອການຕັດສິນວ່າກ່າວຢ່າງເໝາະສົມ. ໃຫ້ສະມາຊິກຫ້ອງອ່ານວັກນີ້ດ້ວຍຕົນເອງຄ່ອຍໆ. ໃຫ້ສົນທະນາກັນ: <u>ໃນເມື່ອ "ການທູນຂໍ" ໝາຍຄວາມວ່າເປັນການກະທຳຕໍ່ເນື່ອງໄປ, ການກະທຳຢ່າງນີ້ຈະເປັນຜົນປະໂຍດຕໍ່ພວກເຮົາຫລືຕໍ່ພຣະເຈົ້າ? ເປັນຜົນປະໂຍດໃນທາງໃດ?</u> ຮ້ອງຂໍໃຫ້ຜູ້ນຶ່ງອາສາສມັກອະທິບາຍຄວາມສຳພັນຂອງ "ການຊອກ" ແລະ "ການເຄາະ" ໃນການອະທິຖານ.

6. ໃຫ້ອ່ານບົດທີ 7:12 ດັງໆ. <u>ຂໍ້ນີ້ເປັນຄຳສອນທີ່ໜ້າສົນໃຈຫລາຍ ຫລາຍຄົນເຂົ້າໃຈວ່າເປັນຄຳສອນຂອງເຖົ້າເກົ່າບູຮານ ແລະພວກເຂົາບໍ່ຮູ້ເລີຍວ່າແມ່ນຄຳສອນຂອງພຣະເຢຊູ, ທ່ານຄິດວ່າ ເປັນດ້ວຍເຫດໃດ ພຣະເຢຊູຈຶ່ງກ່າວວ່າ "ອັນນັ້ນຄືພຣະບັນຍັດແລະຄຳສັ່ງສອນຂອງບັນດາຜູ້ປະກາດພຣະທັມ"?</u>

7. ໃຫ້ສະມາຊິກຫ້ອງອ່ານວັກນີ້ທີ່ມີຫົວຂໍ້ "ການຕັກເຕືອນແລະການຮັບຮອງ" ໃນ <u>ບົດຮຽນສະມາຊິກຫ້ອງ</u>. ໃຫ້ແບ່ງປັນຂໍ້ຄິດກັບພວກເຂົາວ່າ: <u>ຄຳສອນຕອນທ້າຍສາມາດໃຫ້ພວກເຮົາລະນຶກເຖິງຄຳຊີ້ແນະຈາກພໍ່ແມ່ທີ່ຮັກລູກເຕົ້າທີ່ຈາກໄປສູ່ມະຫາວິທະຍາລັຍຊຶ່ງກວມໄປໝົດຖ້ອຍຄຳທີ່ມີຕໍ່ລູກ. ຄຳເວົ້າຂອງຄົນສາມັນທັມດາກໍຈະສລູບໄດ້ດັ່ງນີ້:</u>

- ຢ່າເຫັນແກ່ແຕ່ທາງມັນງ່າຍຂອງຊີວິດ.
- ໃຫ້ຕຶກຕອງເບິ່ງເມື່ອເວົ້ານຳຄົນ. ໃຫ້ເບິ່ງເຂົາທາງນອກແລະທາງໃນ.

<u>ໃນຕອນບັ້ນປາຍ ພຣະເຢຊູຊົງສັ່ງພວກເຮົາດ້ວຍເຣື່ອງລາວທີ່ເປັນຖ້ອຍຄຳປະກອບຮູບພາບ ຊຶ່ງເປັນການຮັບຮອງວ່າຮາງວັນຈະເປັນຂອງຜູ້ທີ່ໄດ້ຟັງຄຳສອນຂອງພຣະອົງແລ້ວນຳໄປປະຕິບັດໃນຊີວິດຂອງພວກເຮົາ.</u> ໃຫ້ອ່ານຫລືເລົ່າເຣື່ອງຈາກພຣະທັມມັດທາຍ 7:24-27.

## <u>ໝູນໃຊ້ໃນການກະທຳ</u>

8. ໃຫ້ນຳພາສະມາຊິກຫ້ອງທົບທວນບົດຮຽນທັງຫ້າບົດຂອງການເທສນາຢູ່ຈ້າຍພູ. ໃຫ້ພວກເຂົາໃຊ້ເວລາສັ້ນໆວິເຄາະເບິ່ງແຕ່ລະບົດຮຽນ. ຊ່ອຍພວກເຂົາແຕ່ງຂໍ້ຄວາມສລູບຈາກແຕ່ລະບົດຮຽນ ແລ້ວໃຫ້ຜູ້ນຶ່ງຂຽນຂໍ້ຄວາມນັ້ນໄວ້ ຫລັງຈາກນັ້ນໃຫ້ນຳມາອ່ານໃຫ້ທຸກຄົນໄດ້ຟັງ.

9. ໃຫ້ຖາມວ່າ: <u>ທ່ານຮູ້ສຶກຍືນຂຶ້ນຕົບມື ຫລືຮ້ອງເພງສັຣເສີນພຣະເຈົ້າບໍ່ ເນື່ອງຈາກພຣະຄຳຂອງພຣະອົງ, ພຣະຄັມພີ, ແລະເພື່ອພຣະເຢຊູ, ພຣະບຸດຂອງພຣະເຈົ້າ, ຜູ້ທີ່ໄດ້ສັ່ງສອນພວກເຮົາໃນການໃຊ້ຊີວິດ? ທ່ານຕອບສນອງຕໍ່ການຮຽນຮູ້ຈາກຄຳສອນນີ້ຢ່າງໃດ?</u> ໃຫ້ເວລາພວກເຂົາຕອບ.

10. ປິດຫ້ອງຮຽນດ້ວຍການຢືນຂຶ້ນແລະຮ້ອງເພງຂອບຄຸນພຣະເຈົ້າ ຫລືດ້ວຍການອະທິຖານຂອບຄຸນພຣະເຈົ້າ. ຫລືທັງສອງຢ່າງໃນການສັຣເສີນພຣະເຈົ້າ!

# ບົດແນະນໍາການສິດສອນ
# ບົດຮຽນທີ 6
# ຖືກເອີ້ນເຂົ້າມາສູ່ການປະກາດຂອງພຣະເຢຊູ

---

ຂໍ້ພຣະຄັມພີສໍາລັບບົດຮຽນ: ມັດທາຍ 9:35-10:15
ຂໍ້ພຣະຄັມພີສໍາລັບເບື້ອງຫລັງ: ມັດທາຍ 9:35-10:15
ຈຸດສໍາຄັນຂອງບົດຮຽນນີ້: ພຣະເຢຊູຊົງເອີ້ນໃຫ້ສາວົກຂອງພຣະອົງເຂົ້າພົວພັນໃນການປະກາດຂອງພຣະອົງ ແລະພຣະອົງຊົງໂຜດຊີ້ແນະໃຫ້ເພື່ອນໍາໄປປະຕິບັດ.
ຄໍາຖາມເພື່ອການສໍາຣວດ: ການຊົງເອີ້ນຂອງພຣະເຢຊູໃຫ້ມາເປັນສາວົກຂອງພຣະອົງ ເພື່ອເຂົ້າພາກສ່ວນໃນການປະກາດຂອງພຣະອົງ ນໍາມາໃຊ້ກັບພວກເຮົາໃນສມັຍນີ້ໄດ້ຢ່າງໃດ?
ຈຸດປະສົງຂອງບົດຮຽນນີ້: ເພື່ອຊັ່ງຊາເບິ່ງໂບດທີ່ຂ້າພຣະເຈົ້າສັງກັດຢູ່ແລະຂ້າພະເຈົ້າໄດ້ຕອບສນອງຕໍ່ການຊົງເອີ້ນຂອງພຣະເຢຊູ ເພື່ອເຂົ້າພາກສ່ວນໃນການປະກາດຂອງພຣະອົງ.

## ແຜນການສິດສອນ

### ຊີວິດສະພາບຕົວຈິງ

1. ໃຫ້ຖາມພວກສະມາຊິກຫ້ອງຮຽນວ່າ, ພວກເຂົາເຄີຍຮັບເອົາວຽກຂອງຄົນອື່ນມາບໍ່? ໃນຂະນະທີ່ພວກເຂົາເລົ່າປະສົບການຂອງພວກເຂົານັ້ນ ໃຫ້ພວກເຂົາບອກຊື່ວຽກ, ບັນລະຍາຍເຖິງວຽກທີ່ເຮັດນັ້ນ, ການຝຶກວຽກ, ແລະອື່ນໆ. ທ່ານອາດຈະເອົາໃບລາຍການບັນລະຍາຍເຖິງວຽກການນັ້ນໄປອ່ານໃຫ້ພວກສະມາຊິກຫ້ອງຮຽນຟັງອີກດ້ວຍ.

2. ຊີ້ໃຫ້ພວກສະມາຊິກຫ້ອງຮຽນເບິ່ງບົດຮຽນຂອງມື້ນີ້ ພຣະເຢຊູຊົງໃຊ້ໃຫ້ພວກສາວົກຂອງພຣະອົງໄປເຮັດວຽກທີ່ພຣະອົງຊົງເຮັດມາແລ້ວ. ໃນຂະນະທີ່ເວລາອະນຸຍາດ ຊີ້ໃຫ້ພວກເຂົາເຫັນຂໍ້ພຣະຄັມພີທີ່ໄດ້ສະແດງໃຫ້ເຫັນພາຣະກິດຂອງພຣະອົງ:
   - ມັດທາຍ 4:23-25
   - ມັດທາຍ 8:1-3, 5-13, 14-17, 28-34
   - ມັດທາຍ 9:1-8, 18-25, 27-29, 32-33

3. ໃຫ້ອ່ານມັດທາຍ 9:35 ແລະຫນູນໃຈສະມາຊິກຫ້ອງຮຽນໃຫ້ຟັງພຣະຄໍາຕອນນີ້ແລະຕິດຕາມເບິ່ງຂໍ້ຄວາມທີ່ສະແດງອອກເຖິງກິຈການຂອງການຮັບໃຊ້ຂອງພຣະອົງ. ຄໍາດັ່ງກ່າວຮ່ວມຢູ່ໃນພຣະທັມຕອນນີ້ ເຊັ່ນມີຄໍາວ່າ ສັ່ງສອນ, ປະກາດຂ່າວປະເສີດ, ແລະ ໂຜດຄົນມີພະຍາດແລະຄວາມເຈັບໄຂ້ທຸກຢ່າງໃຫ້ດີຫມົດ. ໃຫ້ອະທິບາຍເຖິງພາຣະກິດຂອງພຣະອົງຢ່າງຫຍໍ້ໆ.

### ສຶກສາບົດຮຽນ

4. ໃຫ້ຂຽນໂຄງຮ່າງຂອງບົດຮຽນຂອງວັນນີ້ໃສ່ໃນກະດານ:
   ການປະກາດ: ຝູງແກະແລະການເກັບກ່ຽວ (9:35-39)

ຜູ້ປ່າວຂ່າວ: ຈາກການເປັນສາວົກທີ່ບໍ່ເຫມັ້ງບໍ່ຕີງກາຍມາເປັນອັຄທູດທີ່ຫ້າວຫັນ (10:1-4)
ຄຳສອນ: "ຣາຊອານາຈັກສວັນມາໃກ້ແລ້ວ (10:5-8)
ວິທີການ: ຮັບເອົານຳຫນ້ອຍແຕ່ໃຫ້ຫລາຍ (10:9-15)
ການວັດແທກ: ຜູ້ປ່າວຂ່າວເຂົ້າສູ່ການມອບຫມາຍ

5. ຮ້ອງຂໍໃຫ້ສະມາຊິກຫ້ອງຮຽນຄົນນຶ່ງອ່ານມັດທາຍ 9:35-39 ດັງໆ. ໃຫ້ຖາມພວກເຂົາດ້ວຍຄຳຖາມດັ່ງຕໍ່ໄປນີ້:
- ເມື່ອພຣະເຢຊູເຫັນຝູງຊົນຈຳນວນຫລວງຫລາຍ ພຣະອົງມີຄວາມຮູ້ສຶກຢ່າງໃດ? ເປັນດ້ວຍເຫດໃດພຣະອົງຈຶ່ງມີຄວາມຮູ້ສຶກຢ່າງນັ້ນ?
- "ເຂົ້າທີ່ຈະກ່ຽວນັ້ນກໍຫລາຍແທ້ ແຕ່ຄົນງານມີຫນ້ອຍຢູ່" ຄຳນີ້ມີຄວາມຫມາຍວ່າຢ່າງໃດ?
- ໃນຂໍທີ່ 38 ພຣະເຢຊູຊົງແນະນຳວ່າຢ່າງໃດ? ພຣະທັມຕອນນີ້ມີຄວາມຫມາຍຢ່າງໃດສຳລັບພວກເຮົາ?

6. ນຳພາສະມາຊິກຫ້ອງຮຽນໃຫ້ສົມທຽບແລະຄວາມແຕກຕ່າງໃນພຣະທັມມັດທາຍ 10:1; ແລະມັດທາຍ 9:35. ພຣະທັມສອງຂໍ້ນີ້ມີຄວາມແຕກຕ່າງກັນຢ່າງໃດ? ມີຄວາມຄ້າຍຄືກັນຢ່າງໃດແດ່?

7. ບອກໃຫ້ສະມາຊິກຫ້ອງຮຽນຕັ້ງໃຈຟັງຍາມອ່ານລາຍຊື່ຂອງພວກສາວົກໃນພຣະທັມມັດທາຍ 10:2-4. ຮ້ອງຂໍໃຫ້ຄົນຜູ້ເກົ່າອ່ານມັດທາຍ 4:18-22 ແລະໃຫ້ອີກຜູ້ນຶ່ງອ່ານມັດທາຍ 9:9. ໃຫ້ຖາມໄປວ່າ, ພວກທ່ານສັງເກດເຫັນວ່າພວກສາວົກເຫລົ່ານີ້ທີ່ຕິດຕາມພຣະຄຣິດມີລັກສະນະຢ່າງໃດ? ບອກໃຫ້ພວກເຂົາອີກວ່າຢູ່ໃນພຣະທັມຕອນອື່ນກໍໄດ້ຮຽບຮຽງລາຍຊື່ຂອງພວກເຂົາດ້ວຍ (ມາຣະໂກ 3:16-19; ລູກາ 6:13-16; ກິຈການ 1:13).

8. ໃຫ້ສະມາຊິກຫ້ອງເບິ່ງພຣະທັມມັດທາຍ 10:5-8 ເພື່ອຊີ້ໃຫ້ເຫັນເຣື່ອງທີ່ພວກສາວົກໄດ້ປະກາດ. ຊີ້ໃຫ້ພວກເຂົາເບິ່ງພຣະທັມຂໍ້ນີ້, "ຣາຊອານາຈັກສວັນມາໃກ້ແລ້ວ" ທີ່ໄດ້ຂຽນໄວ້ໃນກະດານ. ໃຫ້ພາພວກເຂົານຳພຣະທັມຂໍ້ນີ້ມາສົນທະນາກັນ.

9. ໃຫ້ສັງເກດເບິ່ງຂໍ້ 5-8 ເຣື່ອງທີ່ພວກສາວົກໄດ້ປະກາດ, ຕໍ່ມາໃຫ້ເບິ່ງຂໍ້ທີ 9-15 ຊີ້ໃຫ້ພວກເຂົາເບິ່ງທ່າທີຂອງພວກອັຄທູດ-ຮັບເອົານຳຫນ້ອຍແຕ່ໃຫ້ຫລາຍ. ໃຫ້ພວກເຂົາຕອບຄຳຖາມດັ່ງຕໍ່ໄປນີ້:
- ເປັນຫຍັງພຣະເຢຊູຈຶ່ງສັ່ງໃຫ້ພວກເຂົາບໍ່ໃຫ້ນຳສິ່ງຂອງຕິດຕົວໄປໃນການເດີນທາງ?
- ຄຳວ່າ "ຜູ້ໃດເປັນຜູ້ສົມຄວນ"[1] ຫລື "ຜູ້ພ້ອມທີ່ຈະຕ້ອນຮັບ"[2] ແມ່ນເປັນຄົນຢ່າງໃດ?
- ມີຫຍັງຈະເກີດຂຶ້ນກັບຜູ້ທີ່ບໍ່ຕ້ອນຮັບພວກອັຄທູດ? ເປັນດ້ວຍເຫດໃດ?

[1] (ພຣະຄຣິສຕະທັມຄັມພີ ພາກ ພຣະສັນຍາໃຫມ່ ສະບັບ 1973)
[2] (ພຣະຄຳພີຂອງຊາວຄຣິດ ພາສາຂອງຄົນທົ່ວໄປ ສະບັບ 2000)

## ຫມູນໃຊ້ໃນການກະທຳ

10. ໃຫ້ສະມາຊິກຫ້ອງກັບຄືນມາເບິ່ງພຣະທັມມັດທາຍ 9:36 ອີກເທື່ອນຶ່ງ ແລະເບິ່ງຄຳວ່າ "ສົງສານ." ໃຫ້ຖາມພວກເຂົາວ່າ:
- ທ່ານເປັນແວ່ນແຍງໃຫ້ຄົນອື່ນເຫັນຄວາມສົງສານຂອງພຣະເຢຊູຫລືບໍ່?
- ຖ້າທ່ານເປັນ, ໃນທາງໃດແດ່?
- ຖ້າທ່ານບໍ່ເປັນ, ທ່ານຈະເລີ້ມໄດ້ຢ່າງໃດ?

11. ໃຫ້ປຶກສາກັບພວກສະມາຊິກຫ້ອງຮຽນວ່າ ມີທາງໃດແດ່ທີ່ພວກເຂົາສາມາດທີ່ຈະຕິດຕາມ ຕອບສນອງເຖິງການ ຊົງເອີ້ນຂອງພຣະເຢຊູໃນການປະກາດ. ບອກໃຫ້ພວກເຂົາຮູ້ວ່າໃນອະນາຄົດຖ້າມີການເດີນທາງໄປປະກາດໃຫ້ ພວກເຂົາເຂົ້າມີພາກສ່ວນນໍາ (ການໄປປະກາດແລະຊ່ອຍເຫລືອຕາມເມື່ອງຕ່າງໆຫລືຣັຖອື່ນໆ ຫລືໄປຕ່າງປະເທດ ກໍໄດ້. ການປະກາດຂ່າວປະເສີດຮ່ວມທັງການຊ່ອຍເຫລືອຫລາຍຢ່າງເຊັ່ນ ເຂົ້າພາກສ່ວນເປັນຜູ້ຊ່ອຍປຸກເຮືອນໃຫ້ ຜູ້ທີ່ບໍ່ມີເຮືອນ (Habitat in Humanity) ຫລືກັບເມືອເມືອງລາວຊ່ອຍສ້າງໂຮງຮຽນໃຫ້ຣັຖບານ ຫລືຊ່ອຍເຫລືອເດັກ

ກໍາພ້າ ຂຸດນໍ້າສ້າງບາດານ ຊ່ອຍໃນໂຮງຮຽນພຣະຄັມພີໃນຍາມພັກຣະດູຮ້ອນ (Vacation Bible School) ຕິດຕໍ່

ມາຫາປະທານຂອງລາວຊາວເທີນບັບຕິດສັມພັນ (972) 642-6171 ຫລື ປະທານຂອງສະຫະພັນຄຣິສຕະຈັກ ລາວ (909) 421-8077 ຖ້າຢາກໄປຊ່ອຍໃນປະເທດລາວ). ຫນູນໃຈໃຫ້ສະມາຊິກຫ້ອງຮຽນຕອບສນອງໃນ ການຊົງເອີ້ນຂອງພຣະເຈົ້າດ້ວຍການເຊື່ອຟັງໃຫ້ໄປປະກາດຂ່າວປະເສີດ ແລະການຊ່ອຍເຫລືອສົງເຄາະມະນຸດ ທັງຫລາຍ.

12. ອະທິຖານປິດບົດຮຽນ.

ສ.ຈ. ບຸນເຮັ່ງ ພົງປຣະພັນ

# ບົດແນະນຳຄຣູສອນ
# ບົດຮຽນບົດທີ່ 7
# ເຊື່ອເທົ່ານັ້ນ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ມັດທາຍ 10:16-42
ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້: ມັດທາຍ 10:16-42
ຈຸດສຳຄັນຂອງບົດຮຽນນີ້: ເພື່ອບອກໃຫ້ຮູ້ວ່າຄຣິສຕຽນຈຳຕ້ອງເຮັດຕາມແບບຢ່າງພຣະເຢຊູ
ຄຳຖາມເພື່ອການສຳຣວດ: ເຮົາຈະເຮັດຕາມແບບຢ່າງພຣະເຢຊູໄດ້ຢ່າງໃດ?
ຈຸດປະສົງຂອງບົດຮຽນນີ້: ເພື່ອເຮົາບໍ່ເຫັນແກ່ຕົນເອງ ແຕ່ເພື່ອເຫັນແກ່ຄົນທັງປວງຢ່າງພຣະເຢຊູ

ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ມະນຸດທຸກຄົນຖືກສ້າງໃຫ້ມີຮູບຮ່າງຄ້າຍຄືພຣະເຈົ້າ.
- ນຳຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.

## ບົດນຳ

ເກມ Fear Factor ໃນທີວີກຳລັງເປັນທີ່ນິຍົມຊົມຊອບຂອງຜູ້ມັກສ່ຽງພັຍ, ໃນເກມຈະມີການສ່ຽງພັຍແດ່, ສະແດງຄວາມເກັ່ງດ້ວຍສິ່ງຕ່າງໆເຊັ່ນ; ຈົກລົງໄປຈັບປາໄຫລໄຟຟ້າແລ້ວຈັບມັນຍ້າຍໄປຖັງອື່ນ, ມຸດນໍ້າໃນຍາມໜາວເພື່ອໄປເອົາທຸງໃຕ້ນໍ້າຂຶ້ນມາແດ່, ໂຕນຈາກເຮລີຄອບເຕີແດ່, ໂດດຈາກຣົດຄັນນຶ່ງໄປຍັງອີກຄັນນຶ່ງໃນຂະນະທີ່ຣົດກຳລັງແລ່ນຢູ່ແດ່ ເບິ່ງແລ້ວມີແຕ່ແນວເປັນຕາຢ້ານ ຄັນແມ່ນເຣື່ອງກິນກໍແມ່ນກິນຮອດຂີ້ກະເດືອນບົດໃສ່ກັບແມງສາບ ແລະຍັງມີຫລາຍແນວທີ່ຂ້າພະເຈົ້າບໍ່ສາມາດພັນລະນາໄດ້. ຄຳຖາມມີຢູ່ວ່າເປັນຫຍັງພວກຄົນທີ່ເຂົ້າໄປແຂ່ງຂັນນັ້ນຈຶ່ງຍອມເຮັດຕາມຄຳສັ່ງຂອງຜູ້ຈັດລາຍການ? ຂ້າພະເຈົ້າເຊື່ອວ່າກ່ອນຈະມີຄົນກຸ່ມນ້ອຍນີ້ເຂົາອາດຈະເລືອກຜູ້ສມັກມາເປັນຮ້ອຍໆຄົນແລ້ວ ດັ່ງນັ້ນຜູ້ທີ່ເຂົ້າມາແຂ່ງຂັນຕ້ອງເຮັດຢ່າງຈິງຈັງເພື່ອລາງວັນອັນສວຍງາມຢູ່ຂ້າງໜ້າ.

ສຳລັບເຮົາຜູ້ຮັບໃຊ້ພຣະເຈົ້າໃນຖ້າມກາງຝູງໝາໄນຊຶ່ງເປັນຊີວິດຈິງ ຫາກມັນເກີດຂຶ້ນກໍແມ່ນເກີດຂຶ້ນຈິງໆ ຖ້າໄດ້ຮັບບຳເໜັດກໍແມ່ນບຳເໜັດຈິງໆທີ່ໃຊ້ຈ່າຍບໍ່ຫມົດຄືບຳເໜັດຂອງ Fear Factor ດັ່ງນັ້ນຫາກຜູ້ຮັບໃຊ້ຢາກໄດ້ບຳເໜັດທີ່ພຣະເຢຊູກ່າວເຖິງນັ້ນ ຜູ້ຮັບໃຊ້ໃນຖ້າມກາງຝູງໝາໄນກໍຈະບໍ່ຢ້ານເພາະເຫັນບຳເໜັດຢູ່ຂ້າງໜ້າ.

1. ຂໍໃຫ້ຜູ້ນຶ່ງອ່ານ ມັດທາຍ 10:16-25
   ກ. ອະທິບາຍແກະໂຕນຶ່ງໃນຖ້າມກາງຝູງໝາໄນ, ແລະອະທິບາຍແກະເປັນຝູງນຶ່ງທີ່ມີໝາໄນໂຕດຽວ.
   ຂ. ອະທິບາຍສລາດເໝືອນງູ ແລະສຸພາບເໝືອນນົກເຂົາ (ຂໍ້ 16ຂ).

ຄ. ອະທິບາຍທົນໄດ້ຈົນເຖິງທີ່ສຸດ, ແລະຖືກຂົ່ມເຫງເມືອງນີ້ງໃຫ້ໜີໄປເມືອງອື່ນ (ຂໍ້ 23).
ງ. ອະທິບາຍສິດບໍ່ໃຫຍ່ກວ່າຄຣູ (ຂໍ້ 25ກ)
ຈ. ອະທິບາຍ ເບເອນເຊບູນ(ຂໍ້ 25ຂ).

2. ຂໍໃຫ້ຜູ້ນຶ່ງອ່ານ 10:26-33
ກ. ອະທິບາຍຄຳວ່າ ຢ່າຊູ່ຢ້ານເຂົາ. (ຂໍ້ 26ກ).
ຂ. ອະທິບາຍຄຳວ່າ ບໍ່ມີສິ່ງໃດປົກບັງໄວ້ທີ່ຈະບໍ່ເປີດເຜີຽ (ຂໍ້ 26ຂ).
ຄ. ອະທິບາຍ ຈົ່ງປະກາດເທິງຫລັງຄາເຮືອນ (ຂໍ້ 27).
ງ. ອະທິບາຍ ບໍ່ໃຫ້ຢ້ານຜູ້ຂ້າໄດ້ແຕ່ຮ່າງກາຍແຕ່ໃຫ້ຢ້ານຜູ້ອາດໃຫ້ທັງຈິດວິນຍານແລະຮ່າງກາຍຈິບຫາຍໃນ ໜນົ້ນະຣົກ (ຂໍ້ 28).
ຈ. ອະທິບາຍເຣື່ອງນົກຈອກສອງໂຕ (ຂໍ້ 29-33).

3. ຂໍໃຫ້ຜູ້ນຶ່ງອ່ານ 10:34-42
ກ. ອະທິບາຍຢ່າງຣະມັດຣະວັງເຣື່ອງເອົາດາບມາໃຫ້ (ຂໍ້ 34-36).
ຂ. ອະທິບາຍ ຜູ້ໃດຮັກພໍ່ແມ່ຫລາຍກວ່າພຣະເຢຊູກໍບໍ່ເຫມາະສົມກັບພຣະອົງ.
ຄ. ບອກນັກຮຽນວ່າ ພຣະອົງຊົງສອນໃຫ້ລູກຮັກແລະນັບຖືພໍ່ແມ່ຕາມຂໍ້ພຣະຄັມພີທີ່ມີໃນບົດຮຽນ.
ງ. ອະທິບາຍແບກໄມ້ກາງແຂນຂອງຕົນ (ຂໍ້ 38).
ຈ. ອະທິບາຍ ຜູ້ເອົາຊີວິດຈະເສັຽ ຜູ້ຍອມເສັຽຈະໄດ້ (ຂໍ້ 39).
ສ. ອະທິບາຍຜູ້ຕ້ອນຮັບຜູ້ຮັບໃຊ້ພຣະເຈົ້າຕລອດເຖິງຜູ້ເອົານ້ຳໃຫ້ດື່ມຈອກດຽວກໍຈະບໍ່ຂາດບຳເໜັດ.

ຄຳຖາມ:

1. ວັນນີ້ທ່ານຮູ້ແລ້ວວ່າ ຜູ້ຮັບໃຊ້ຈະຕ້ອງພົບກັບອຸປະສັກທີ່ກ່າວມາ ທ່ານຍັງຢາກຮັບໃຊ້ຢູ່ບໍ່?

2. ຫາກທ່ານຕອບວ່າຢາກຮັບໃຊ້ ທ່ານຈະເຮັດຫຍັງແດ່ເລີ້ມແຕ່ວັນນີ້ເປັນຕົ້ນໄປ?

3. ເຮັດແນວໃດທ່ານຈຶ່ງຈະທົນຕໍ່ເຫດການທີ່ຈະເກີດຂື້ນໄດ້?

4. ມີໃຜບໍ່ແນ່ໃຈຈະໄປບ່ອນທີ່ພຣະອົງຊົງໃຊ້ໄປ? ເຊີນຖວາຍຕົວໂດຍກາຍອ່ອນນອມ.

ສ.ຈ. ທູນພັນ ວົງສຸຣິດທ໌

# <u>ຄຳແນະນຳສຳລັບຄຣູສອນ</u>
# <u>ບົດຮຽນບົດທີ 8</u>
# <u>ເມື່ອເວລາເກັບກ່ຽວມາເຖິງ</u>

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ມັດທາຍ 13:1-23
<u>ຂໍ້ພຣະຄັມພີສຳລັບສຳລັບເບື້ອງຫຼັງ:</u> ມັດທາຍ 13:1-23
<u>ຈຸດສຳຄັນຂອງບົດຮຽນນີ້:</u> ການເກັບກ່ຽວໃນພັນທະກິດຂອງພຣະຄຣິດເປັນສິ່ງທີ່ແນ່ນອນແລະອຸດົມສົມບູນ, ການຕອບຮັບພຣະເຢຊູຂອງຄົນທັງຫລາຍຈະບອກເຖິງຖານະຂອງແຕ່ລະຄົນໃນການເກັບກ່ຽວນັ້ນ.

<u>ຄຳຖາມເພື່ອການສຳຣວດ:</u> ອີງໃສ່ໂລກໃນປັດຈຸບັນນີ້, ແມ່ນຫຍັງນໍຈະເກີດຂື້ນກັບພັນທະກິດຂອງພຣະຄຣິດ?
<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອພິຈາຣະນາເບິ່ງໜ້າທີ່ຂອງຕົວເອງໃນພັນທະກິດອັນແນ່ນອນຂອງພຣະຄຣິດ.

## <u>ແຜນສຳລັບການສອນ</u>

<u>ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)</u>

1. ເຊີນນັກຮຽນຜູ້ນຶ່ງໄວ້ລ່ວງໜ້າ ໃຫ້ເວົ້າເຣື່ອງປະສົບການເຣື່ອງການເຮັດສວນໃຫ້ເພື່ອນນັກຮຽນຟັງ. ຂໍໃຫ້ນັກຮຽນຄົນນີ້ເວົ້າເຣື່ອງຄວາມລຳບາກໃນການຕຽມດິນ, ເຣື່ອງເມັດພືດ, ແລະເຣື່ອງການເກັບກ່ຽວ.

2. ແນະນຳບົດຮຽນສຳລັບມື້ນີ້ຈາກຄຳອຸປມາຂອງພຣະເຢຊູໃນພຣະທັມມັດທາຍ. ໃນຄຳອຸປມານີ້, ພຣະເຢຊູໄດ້ເຊີນຜູ້ຟັງທັງຫລາຍໃຫ້ພິຈາຣະນາເຣື່ອງຣາຊອານາຈັກສວັນຈາກເຣື່ອງດິນ, ເມັດພືດ, ແລະການເກັບກ່ຽວ.

3. ແນະນຳຫົວຂໍ້ໃຫຍ່ຂອງບົດຮຽນ; ທ່ານອາດຈະຂຽນໃສ່ກະດານ ຫລືຂຽນໃສ່ໂປສເຕີ້.

<u>ເມື່ອເວລາເກັບກ່ຽວມາເຖິງ</u>

- ເບື້ອງຫລັງສາກ (13:1-2)
- ເນື້ອງເຣື່ອງ (13:3-9)
- ຄວາມເລິກລັບ (13:10-17)
- ຜູ້ຫວ່ານ, ເມັດພືດ, ແລະດິນ (13:18-23)
- ຄວາມສຳເຣັດ

<u>ນຳພາການສຶກສາພຣະຄຳ (ໃຊ້ເວລາ 30 ນາທີ)</u>

4. ໃຊ້ ມັດທາຍ 13:1-2 ເພື່ອອະທິບາຍເບື້ອງຫລັງສາກ ແລະເນື້ອໃນໃຈຄວາມຂອງຄຳອຸປມາ. ເຕືອນນັກຮຽນວ່າການສອນຂອງພຣະເຢຊູໃນພຣະທັມສອງບົດທີ່ຜ່ານມາໄດ້ເຮັດໃຫ້ມີການຕໍ່ສູ້ກັນພາຍໃນຝູງຊົນທັງຫລາຍ.

5. ອ່ານຂໍ້ 3-9. ເຊີນໃຫ້ທຸກຄົນຕັ້ງໃຈຟັງເຣື່ອງດິນສີ່ປະເພດທີ່ພຣະເຢຊູກຳລັງອະທິບາຍຢູ່ ແລະຜົນເກັບກ່ຽວຈາກດິນແຕ່ລະຊະນິດ. ຂໍໃຫ້ຜູ້ນຶ່ງຂຽນໃສ່ກະດານຕາມທີ່ນັກຮຽນໄດ້ສັງເກດເຫັນ.

6. ເບິ່ງຄຳຖາມຂອງພວກອັຄສາວົກໃນຂໍ້ 10, "ເຫດສັນໃດທ່ານຈຶ່ງກ່າວກັບເຂົາເປັນຄຳອຸປມາ?" ໃຊ້ບົດຮຽນເພື່ອຊ່ວຍໃນການອະທິບາຍຄຳຕອບຂອງພຣະເຢຊູ ແລະເບິ່ງ ເອຊາຢາ 6:9-10 ຊຶ່ງມີຢູ່ໃນມັດທາຍ 13:14-15.

7. ເຕືອນນັກຮຽນວ່າໃຫ້ແຕ່ລະຄົນລະມັດລະວັງເວລາຕີຄວາມໝາຍຂອງຄຳອຸປມາ; ຢ່າກຳໜົດຄວາມໝາຍໄວ້ກັບຄວາມຈິງຢ່າງດຽວ ເພາະບາງຄັ້ງຄຳອຸປມາອາດຈະເປັນເຣື່ອງສົມມຸດເພື່ອຈະສອນຄວາມຈິງຫລາຍໆຢ່າງ.

8. ສຳລັບຄຳອຸປມາເຣື່ອງນີ້, ພຣະເຢຊູໄດ້ຕີຄວາມໝາຍໃຫ້ພວກເຮົາແລ້ວໃນຂໍ້ 18-23. ໃຫ້ນັກຮຽນຜູ້ນຶ່ງອ່ານແລ້ວໃຫ້ພວກນັກຮຽນຕອບຄຳຖາມຕໍ່ໄປນີ້:
   - ໃຜເປັນຜູ້ຍາດເອົາເມັດໄປ?
   - ການຕອບຮັບຄຳເວົ້າໂດຍບໍ່ພິຈາຣະນາຜົນເສັຍຫາຍຈະເປັນພັຍແນວໃດ?
   - ແມ່ນຫຍັງແດ່ທີ່ຈະ "ຫຸ້ມຮັດພຣະທັມ" ແລະເຮັດບໍ່ໃຫ້ເກີດຜົນ?
   - ແມ່ນຫຍັງເກີດຂຶ້ນກັບເມັດທີ່ຕົກຢູ່ດິນດີ?
   - ພວກເຮົາຈະອະທິບາຍການເກັບກ່ຽວຢ່າງມາກມາຍທີ່ພຣະເຢຊູຊົງບອກໄວ້ແນວໃດ?

9. ຖາມ: ພວກເຮົາພໍຈະສລຸບຄຳອຸປມາເຣື່ອງຜູ້ຫວ່ານຢ່າງສັ້ນໆວ່າຢ່າງໃດ? ໃຫ້ເວລາເພື່ອພິຈາຣະນາ ແລະຕອບຄຳຖາມນີ້ (ສຳລັບຄຣູ: ການເກັບກ່ຽວໃນພັນທະກິດຂອງ ພຣະຄຣິດເປັນສິ່ງທີ່ແນ່ນອນແລະອຸດົມສົມບູນ; ຜົນຂອງການເກັບກ່ຽວຈະຂຶ້ນຢູ່ທີ່ການຕອບຮັບຂອງຄົນທັງຫລາຍ)

<u>ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

10. ພານັກຮຽນຕອບຄຳຖາມໃນຕອນສຸດທ້າຍຂອງບົດຮຽນນີ້. ສົນທະນາຕາມສົມຄວນ.

11. ໃຫ້ແຕ່ລະຄົນເບິ່ງການເກັບກ່ຽວໃນຊີວິດຂອງຕົນເອງ. ພວກເຂົາເຈົ້າກ່ຽວໄດ້ 100, 60, ຫລື 30? ແຕ່ລະຄົນໃຫ້ຖາມຕົວເອງວ່າ: ຂ້ອຍມີພາກສ່ວນແນວໃດໃນການເກັບກ່ຽວ?

12. ອະທິຖານເພື່ອຖວາຍຕົວ ແລະເພື່ອປິດການຮຽນ.

ສ.ຈ. ສິດນີ ຄານ

# ຄຳແນະນຳສຳລັບຄຣູ
# ບົດຮຽນທີ 9
# ທ່ານຈະອົດທົນບໍ່?

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ມັດທາຍ 13:24-43
ຂໍ້ພຣະຄັມພີສຳລັບສຳລັບເບື້ອງຫຼັງ: ມັດທາຍ 13:24-52
ຈຸດສຳຄັນຂອງບົດຮຽນນີ້: ໃນຂະນະທີ່ພວກເຮົາກຳລັງມີສ່ວນໃນພັນທະກິດຂອງພຣະຄຣິດ, ໃຫ້ພວກເຮົາຮຽນມີຄວາມອົດທົນ ແລະມີຄວາມຕັ້ງໃຈ ເໝືອນດັ່ງພຣະເຈົ້າ ທີ່ຈະເຫັນງານນັ້ນສຳເຣັດ.

ຄຳຖາມເພື່ອການສຳຣວດ: ພວກເຮົາຈະເຮັດຢ່າງໃດເວລາວຽກງານບໍ່ເກີດຜົນ ຫລືບໍ່ຖືກກັບເວລາທີ່ເຮົາຕ້ອງການ?
ຈຸດປະສົງຂອງບົດຮຽນນີ້: ເພື່ອຈະຮູ້ວ່າສິ່ງໃດໃນຊີວິດທີ່ຈຳເປັນຈະຕ້ອງມີຄວາມອົດທົນແລະມີຄວາມຕັ້ງໃຈໃສ່ໃນພັນທະກິດຂອງພຣະຄຣິດ ກ່ອນຈະໄດ້ເຫັນຜົນດີ.

## ແຜນສຳລັບການສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ເຊີນນັກຮຽນໃຫ້ຮ່ວມການທົດລອງເບິ່ງວ່າພວກເຂົາເຈົ້າຈະສາມາດບອກຖືກບໍ່ວ່າ "ນຶ່ງນາທີ" ນັ້ນດົນປານໃດແທ້? ໃຫ້ນັກຮຽນນັ່ງຫລັບຕາແລະບໍ່ປາກ; ບອກໃຫ້ແຕ່ລະຄົນຍົກມືຂຶ້ນເວລາເຂົາເຈົ້າຄິດວ່າຕົນເອງໄດ້ງຽບຢູ່ຄົບນຶ່ງນາທີແລ້ວ. ບັນທຶກເວລາຂອງແຕ່ລະຄົນ ແລ້ວບອກໃຫ້ແຕ່ລະຄົນໄດ້ຮູ້ໃນພາຍຫລັງ.

2. ອະທິບາຍວ່າ ມີຫລາຍຢ່າງທີ່ສາມາດເກີດຂຶ້ນພາຍໃນນຶ່ງນາທີ; ເຄື່ອງໄລ່ເງິນຂອງຮ້ານອາຫານໃນສນາມບິນແຫ່ງນຶ່ງຕັ້ງເວລາໄວ້ວ່າການລໍຄອຍຈະປະມານນຶ່ງນາທີຈາກເວລາລູກຄ້າສັ່ງອາຫານແລະເວລາເຂົາເຈົ້າໄດ້ອາຫານທີ່ຕ້ອງການ. ທຸກຢ່າງໃນສມັຍນີ້ແມ່ນແນ່ໃສ່ຄວາມໄວ. ຄຣິສຕຽນຈະຕ້ອງເຮັດທຸກຢ່າງໃນເວລາທີ່ມີຢູ່; ແຕ່ພວກເຮົາຈະຕ້ອງມີຄວາມອົດທົນ ແລະມີການຕັ້ງໃຈໃສ່ຄວາມສຳເຣັດເຣື່ອງຣາຊອານາຈັກສວັນເໝືອນດັ່ງພຣະເຈົ້າຜູ້ຊົງມີຄວາມອົດທົນ.

### ນຳພາການສຶກສາພຣະຄຳ (ໃຊ້ເວລາ 30 ນາທີ)

3. ຂຽນຫົວຂໍ້ໃຫຍ່ໃສ່ກະດານ:
   - ອົດທົນ: ການລໍຄອຍຈະມາເຖິງ
   - ອົດທົນ: ການພິພາກສາຈະມາເຖິງ (13:24-30; 34-43)
   - ອົດທົນ: ການເຕີບໃຫຍ່ຈະມາເຖິງ (13:31-35)
   - ອົດທົນ: ຊັບອັນລ້ຳຄ່າຈະມາເຖິງ (13:44-45)
   - ອົດທົນ: ຣາຊອານາຈັກສວັນຈະມາເຖິງ

4. ໃຫ້ຜູ້ນຶ່ງອ່ານ ມັດທາຍ 13:24-30; 36-43), ແລ້ວໃຫ້ນັກຮຽນຕອບຄຳຖາມຕໍ່ໄປນີ້:
   - ເຂົ້ານົກ ມີຄວາມສຳຄັນແນວໃດ?

- ເຂົ້ານົກສາມາດສ້າງຄວາມເສັຽຫາຍໃຫ້ເຂົ້າດີໄດ້ແນວໃດ?
- ເປັນຫຍັງເຂົາບໍ່ຫລົກເຂົ້ານົກອອກໃນທັນໃດນັ້ນ ແລ້ວນຳໄປເຜົາໄຟ?
- ໃຜເປັນຜູ້ຫວ່ານ? ໃຜເປັນທົ່ງນາ?
- ຄວາມອົດທົນມີຄວາມສຳຄັນແນວໃດສຳລັບພໍ່ນາ? ແລະສຳລັບພວກເຮົາ?

5. ອ່ານຂໍ້ 31-35. ບອກທຸກຄົນວ່າພຣະຄຳຕອນນີ້ກຳລັງເນັ້ນເຣື່ອງເຕີບໃຫຍ່ສອງປະເພດ(ໃຫຍ່ ແລະໃຫຍ່ອິຫລີ). ອະທິບາຍຄວາມແຕກຕ່າງໂດຍໃຊ້ເມັດຜັກກາດ ແລະເຊື້ອແປ້ງ ເປັນຕົວຢ່າງ.

6. ໃຫ້ຜູ້ນຶ່ງອ່ານເຣື່ອງຊັບທີ່ເຊື່ອງໄວ້ ແລະເຣື່ອງໄຂ່ມຸກທີ່ມີຄ່າແພງ ໃນຂໍ້ 44-46, ແລະໃຫ້ນັກຮຽນຕອບຄຳຖາມຕໍ່ໄປນີ້:
   - ຄຳອຸປມາສອງເຣື່ອງນີ້ມີຄວາມໝາຍແນວໃດ?
   - ອີງຕາມພຣະທັມນີ້, ຣາຊອານາຈັກສວັນມີຄ່າຫລາຍປານໃດ?
   - ພວກເຮົາຈະຈ່າຍຄ່າຊັບທີ່ເຊື່ອງໄວ້ ແລະໄຂ່ມຸກທີ່ມີຄ່າແພງໄດ້ຢ່າງໃດ? ພວກເຮົາມີເງິນພຽງພໍບໍ່?
   - ໃຜເປັນຜູ້ຈ່າຍຣາຄາແພງເພື່ອສິ່ງເລົ່ານີ້ແທນພວກເຮົາ?

<u>ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

7. ເບິ່ງຄຳຖາມໃນຕອນທ້າຍບົດຮຽນນີ້ ຂໍ້ 1, 3, 4, ແລະ 5. ໃຫ້ພວກນັກຮຽນຕອບ ແລະສົນທະນາ.

8. ຖາມ: ເຮັດແນວໃດພວກເຮົາຈະມີຄວາມອົດທົນ? ພວກທ່ານຄິດວ່າການຕັ້ງໃຈໃສ່ພັນທະກິດຂອງພຣະຄຣິດ ແລະການຝຶກແອບໃຫ້ມີຄວາມອົດທົນມີຄວາມສັມພັນກັນແນວໃດ?

9. <u>ຖ້າເວລາພໍ</u>. ໃຫ້ນັກຮຽນຕອບຄຳຖາມຕໍ່ໄປນີ້:
   - ການເຫັນຄົນຫລວງຫລາຍເຮັດໃຫ້ພວກເຮົາຍາກທີ່ຈະອົດທົນບໍ່? ປຽບທຽບເບິ່ງທັສນະຂອງພຣະເຢຊູເວລາພຣະອົງຊົງເຫັນຝູງຊົນຫລວງຫລາຍ (ມັດທາຍ 9:36).
   - ທ່ານຄິດວ່າຄວາມອົດທົນແລະຄວາມສົງສານມີຄວາມສັມພັນກັນບໍ່?
   - ຄວາມອົດທົນແລະຄວາມສົງສານຂອງພວກເຮົາຈະມີຜົນສະທ້ອນຕໍ່ຣາຊອານາຈັກສວັນຢ່າງໃດ?

10. ໃຫ້ອາສາສມັກຜູ້ນຶ່ງອະທິຖານປິດການສຶກສາພຣະຄຳ.

ສ.ຈ. ສິດນີ ຄານ

# <u>ຄຳແນະນຳສຳລັບຄຣູສອນ</u>
# <u>ບົດຮຽນບົດທີ 10</u>
# <u>ຕົວທ່ານແລະ "ພວກເດັກນ້ອຍ"</u>

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ມັດທາຍ 18:1-14
<u>ຂໍ້ພຣະຄັມພີສຳລັບສຳລັບເບື້ອງຫຼັງ:</u> ມັດທາຍ 18:1-14
<u>ຈຸດສຳຄັນຂອງບົດຮຽນນີ້:</u> ຖ່ອມຕົວເພື່ອຜູ້ອື່ນ, ໂດຍບໍ່ເລືອກຊັ້ນວັນນະ, ຄືອຸປນິສັຍພາຍໃນກຸ່ມຄຣິສຕຽນ.

<u>ຄຳຖາມເພື່ອການສຳຣວດ:</u> ໃຜຄືບຸກຄົນສຳຄັນໃນຄຣິສຕະຈັກຂອງທ່ານ?
<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອຈະຫາຊ່ອງທາງແກ້ໄຂການເນັ້ນເຣື່ອງຖານະຊຶ່ງຈະສ້າງບັນຫາໃນຄຣິສຕະຈັກ.

## <u>ແຜນສຳລັບການສອນ</u>

<u>ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)</u>
1. ຕຽມການລ່ວງໜ້າ: ແບ່ງໜ້າກະດານອອກເປັນສີ່ສ່ວນ, ແຕ່ລະສ່ວນໃຫ້ຂຽນຫົວຂໍ້ຕໍ່ໄປນີ້ໃສ່ຂ້າງເທິງ: <u>ຄວາມຍິ່ງໃຫຍ່,</u> ຊື່, <u>ຄວາມສຳເຣັດ,</u> <u>ຄຸນຄ່າສຳລັບຊີວິດ.</u> ໃຫ້ນັກຮຽນຄິດເຖິງບຸກຄົນໃນປະວັດສາດ, ຄວາມສຳເຣັດຂອງເຂົາໃນໂລກ, ຄຸນຣະວຸດທີຂອງເຂົາ, ແລະຄຸນຄ່າສຳລັບມະນຸດທັງຫລາຍທີ່ທ່ານຈົດຈຳໄດ້.

| ຊື່ | <u>ຄວາມສຳເຣັດ</u> | <u>ຄວາມຍິ່ງໃຫຍ່</u> | <u>ຄຸນຄ່າສຳລັບຊີວິດ</u> |
|---|---|---|---|
| ອັບຣາຮາມ ລິງຄອນ | ປະທານາທິບໍດີ | ສົງຄາມກາງເມືອງ | ປົດປ່ອຍຂ້າທາດ |
| ຄຸນແມ່ ຕະຣີສາ | ຊ່ວຍຄົນທຸກຍາກ | | ຄວາມຮັກຂອງພຣະເຈົ້າເພື່ອຄົນ |
| ບິນລີ ກຣາແຮມ | ນັກປະກາດ | | ແຜນການໄຖ່ຂອງພຣະເຈົ້າເພື່ອຄົນ |

* ແນະນຳບົດຮຽນໂດຍການໃຊ້ຄຳນຳໃນບົດຮຽນນີ້

<u>ນຳພາການສຶກສາພຣະຄຳ (ໃຊ້ເວລາ 30 ນາທີ)</u>
2. ພານັກຮຽນຕອບຄຳຖາມຕໍ່ໄປນີ້:
<u>ໃນພຣະທັມມັດທາຍ 16:13-20</u>

- ພຣະເຢຊູຊົງຖາມສາວົກເຣື່ອງຫຍັງ ທີ່ເມືອງກາຍຊາເຣັຽຟີລິບປອຍ?
- ໃຜຖືກເລືອກໃຫ້ເປັນຄົນຕອບພຣະອົງ?
- ພຣະເຢຊູຍ້ຳຄຳຖາມແນວໃດ?
- ໃຜເປັນຜູ້ຕອບ ແລະລາວຕອບວ່າແນວໃດ?
- ພຣະເຢຊູຊົງສັຣເສີນເຂົາວ່າຢ່າງໃດ?
- ພຣະເຢຊູພຍາຍາມຈະສອນພວກສາວົກເຣື່ອງຫຍັງໃນຕອນນີ້?

ໃນພຣະທັມມັດທາຍ 18:1-14

- ພວກສາວົກຖາມຫຍັງແດ່ນຳພຣະເຢຊູເຣື່ອງຣາຊອານາຈັກສວັນ?
- ໃຊ້ເດັກນ້ອຍເປັນຕົວຢ່າງ, ພຣະເຢຊູຊົງບອກພວກສາວົກວ່າພວກເຂົາຈະຕ້ອງເຮັດຢ່າງໃດກ່ອນຈະຮັບຣາຊອານາຈັກສວັນ?
- ພຣະເຢຊູຊົງກ່າວໂທດຫຍັງແດ່ສຳລັບຜູ້ທີ່ປະຕິບັດບໍ່ດີກັບພວກເດັກນ້ອຍ?
- ພຣະເຢຊູຊົງອະທິບາຍຜົນຂອງຄວາມບາບຢ່າງໃດ ແລະຊົງບອກວ່າທຸກຄົນຈະຕ້ອງເຮັດແນວໃດເພື່ອຫລີກເວັ້ນຈາກຄວາມບາບເຫລົ່ານັ້ນ?
- ພຣະເຢຊູຊົງບອກວ່າພວກເດັກນ້ອຍຄວນໄດ້ຮັບການປົກປັກຮັກສາແນວໃດ?
- ພຣະເຢຊູພຍາຍາມຈະສອນພວກສາວົກເຣື່ອງຫຍັງໃນຕອນນີ້?

## ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)

3. ໃຊ້ຄຳອະທິບາຍໃນບົດຮຽນເພື່ອຊ່ວຍຄວາມຄິດແລະການສົນທະນາ:

   - ພວກອັຄສາວົກບໍ່ເຂົ້າໃຈເຣື່ອງຄວາມຍິ່ງໃຫຍ່ໃນຣາຊອານາຈັກຂອງພຣະເຈົ້າ. ທ່ານຄິດວ່າຄົນໃນສມັຍນີ້ມີບັນຫາເຣື່ອງນີ້ບໍ່? ທ່ານຄິດວ່າເພາະຫຍັງ?
   - ພຣະທັມໃນຕອນນີ້ໄດ້ສອນພວກເຮົາ ແລະພວກອັຄສາວົກແນວໃດແດ່?
   - ນຳພາພວກນັກຮຽນໃນການຊອກຫາວິທີທີ່ຈະຊ່ວຍຜູ້ທີ່ຍັງນ້ອຍໃນຄວາມເຊື່ອ. ຂຽນຄຳເຫັນຂອງນັກຮຽນໃສ່ກະດານໃຫ້ທຸກຄົນເຫັນນຳກັນ.

4. ປິດການສຶກສາພຣະຄຳດ້ວຍການອະທິຖານຂໍພຣະເຈົ້າຊົງຊ່ວຍໃຫ້ພວກເຮົາໄດ້ເຫັນຄວາມຕ້ອງການຂອງຄຣິສຕຽນໃໝ່ ແລະພວກສະມາຊິກໃໝ່ໃນຄຣິສຕະຈັກ.

ສ.ຈ. ທູນພັນ ວົງສຸຣິດທ໌

# <u>ບົດແນະນຳຄູສອນ</u>
# <u>ບົດຮຽນທີ 11</u>
# <u>ການປະຕິບັດກັບຜູ້ເຮັດຜິດ</u>

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ມັດທາຍ 18:15-35

<u>ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:</u> ມັດທາຍ 18:15-35

<u>ຈຸດສຳຄັນຂອງບົດຮຽນນີ້:</u> ເພື່ອສອນໃຫ້ເຂົ້າໃຈວ່າການປະຕິບັດກັບຜູ້ເຮັດຜິດບາງຄັ້ງອາດຈະໃຊ້ກົດພຣະຄັມພີໃນການກ່າວເຕືອນຕາມພຣະເມດຕາຈາກເບື້ອງເທິງ

<u>ຄຳຖາມເພື່ອການສຳຣວດ:</u> ເຮົາຈະເຮັດແນວໃດເມື່ອເຫັນຄຣິສຕຽນກັດແຂ້ວຕໍ່ສູ້ກັນ?

<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອບອກໃຫ້ຮູ້ວ່າຄວາມຮັກແພງກັນໃນໂບດເປັນໝາກຜົນຂອງການເປັນຄຣິສຕຽນ

<u>ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ</u>

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ມະນຸດທຸກຄົນຖືກສ້າງໃຫ້ມີຮູບຮ່າງຄ້າຍຄືພຣະເຈົ້າ.
- ນຳຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.

<u>ເລີ້ມຕົ້ນດ້ວຍຄຳຖາມນີ້;</u>

1. ທ່ານເຄີຽໄດ້ຍິນຄົນເວົ້າວ່າ "ຂ້ອຍບໍ່ຢາກໄປໂບດ ເພາະວ່າບໍ່ມັກຜູ້ນັ້ນ, ຫລືເຊົາໄປໂພດເພາະບໍ່ຢາກເຫັນຜູ້ນັ້ນ, ຫລືລາວມາໂບດນີ້ຂ້ອຍກະໄປໂບດໃໝ່, ຫລືລາງຄົນອາດຈະເວົ້າວ່າລາວໄປສວັນຂ້ອຍຈະບໍ່ໄປ. (ຣະວັງຢ່າໃຫ້ນັກຮຽນອອກຊື່ຜູ້ໃດ).

2. ສຳລັບທ່ານເຄີມີຜູ້ໃດໃນໂບດນີ້ຫລືໂບດອື່ນເຮັດໃຫ້ທ່ານຂັດເຄືອງໃຈບໍ່? ເຣື່ອງໃດກໍຢ່າ ມີບໍ່? ແລ້ວບໍ່ຕ້ອງຕອບແຕ່ໃຫ້ສຳນຶກໃນໃຈຂອງທ່ານເອງ.

3. <u>ເຊີນນັກຮຽນສງົບ</u> ແລະອ້ອນວອ້ນໃນໃຈເຂົາເຈົ້າ, ໃຫ້ຫົວຂໍ້ອ້ອນວອນຂໍເທື່ອລະນຶ່ງນາທີດັ່ງນີ້;

ກ. ສັນນະສູດກວດໃຈຕົນເອງ ຍັງມີໃຜໃນໂບດນີ້ທີ່ຂ້ອຍມີຄວາມຂັດເຄືອງໃຈໃນເຣື່ອງໃດເຣື່ອງນຶ່ງ.

ຂ. ຂໍໃຫ້ພຣະເຈົ້າຊົງປົວໃຈທ່ານ ແລະຂໍໂທດອະພັຍຈາກພຣະເຈົ້າທີ່ມີໃຈເຊັ່ນນັ້ນ.

ຄ. ບອກກັບພຣະອົງວ່າທ່ານຈະລືມແລະໃຫ້ອະພັຍລາວແຕ່ວັນນີ້ໄປ.

ງ. ຫລັງຈາກປະມານສາມນາທີແລ້ວຄຣູອ້ອນວອນ ຕາມສາມຫົວຂໍ້ ແລະຂໍການຊົງນຳໃນການຮຽນ.

(<u>ໝາຍເຫຕຸ:</u> ຫາກຄຣູຊອກຫາສຽງດົນຕຣີທີ່ນີ້ມນວນມາເປີດຄ່ອຍໆໃນເວລາອ້ອນວອນຄົງດີ)

4. ຂໍໃຫ້ຜູ້ນຶ່ງອ່ານ ມັດທາຍ 18: 15-17 <u>ວິທີໂອ້ລົມ</u>

ກ. ລົມກັນສອງຕໍ່ສອງ ເພື່ອບໍ່ໃຫ້ເຣື່ອງນ້ອຍກາຍເປັນເຣື່ອງໃຫຍ່.

ຂ. ຫາກບໍ່ເກີດຜົນ ຈຶ່ງເຊີນບຸກຄົນໜ້າເຊື່ອຖືໄປເປັນຄົນກາງ.

ຄ. ຫາກຍັງບໍ່ເກີດຜົນໃຫ້ນຳເອົາເຣື່ອງມາຫາເຖົ້າແກ່ ແລະອາຈານ.

ງ. ຫາກເພິ່ນບໍ່ຍອມຟັງເຖົ້າແກ່ແລະອາຈານໃຫ້ປະປ່ອຍເພິ່ນໄປ ແລະຖືເສັຽວ່າເພິ່ນເປັນຄົນນອກສາສນາ ຂໍ້ 17. ດ້ວຍວ່າຄົນນອກສາສນາຈະບໍ່ຟັງເຖົ້າແກ່ແລະອາຈານຂອງເຮົາ, ຫາກລາວບໍ່ຟັງລາວກໍບໍ່ຕ່າງຫຍັງກັບຄົນພາຍນອກ.

ຈ. ສິ່ງທີ່ໜ້າຄິດຄື: ກ່ອນຈະເວົ້າວ່າເພິ່ນຜິດຈຶ່ງພິຈາຣະນະຄຳເວົ້າຂອງພຣະເຢຊູກ່າວວ່າ ເປັນຫຍັງທ່ານຈຶ່ງຫລຽວເຫັນແຕ່ຂີ້ເຫຍື້ອທີ່ຢູ່ໃນຕາພີ່ນ້ອງຂອງທ່ານ ແຕ່ໄມ້ທັງທ່ອນໃນຕາຂອງຕົນທ່ານບໍ່ຮູ້ສຶກ (ມັດທາຍ 7:4). ໄມ້ທັງທອ່ນຍ່ອມໃຫຍ່ກວ່າຕາສເມີ ເຮັດແນວໃດໄມ້ທັງທ່ອນຈຶ່ງຈະຢູ່ໃນຕາໄດ້.

5. ຂໍໃຫ້ຜູ້ນຶ່ງອ່ານ ມັດທາຍ 18:18-20 <u>ໃນພຣະນາມພຣະເຈົ້າ</u>

ກ. ທຸກຄົນໃນໂບດເປັນຄອບຄົວໃນພຣະເຈົ້າ ເມື່ອເປັນຄອບຄົວດຽວກັນສົມຄວນຕ້ອງປອງດອງກັນ.

ຂ. ບັນຫາຂັດເຄືອງໃຈກັນຫາກແກ້ໄຂກັນໄດ້ ເຣື່ອງໄປເມືອງສວັນກໍບໍ່ມີບັນຫາ ຫາກແກ້ໄຂບໍ່ໄດ້(ຜູກມັດ) ຢູ່ໃນໂລກເປັນສັນໃດ, ໃນສວັນກໍຈະຜູກມັດຄືກັນ (ແປວ່າບໍ່ໄດ້ຮັບການອະພັຍ).

ຄ. ຄອບຄົວດຽວກັນຮັກຈະບໍ່ເບິ່ງແຕ່ສິ່ງຜິດ ຄວນຈະເບິ່ງສິ່ງຖືກຫລາຍກວ່າຜິດ.

ງ. ຫາກມີໃຈປອງດອງກັນທູນຂໍຢ່າງດຽວກັນພຣະເຈົ້າກໍຊົງປະທານ, ຫາກເຮົາຂໍບໍ່ໄດ້ຈຶ່ງຮັບຮູ້ວ່າເຮົາບໍ່ມີໃຈປອງດອງກັນ.

ຈ. ການຊຸມນຸມກັນສອງຄົນໃນພຣະນາມຂອງພຣະອົງໆກໍຊົງສຖິດຢູ່ທີ່ນັ້ນດ້ວຍ. ເມື່ອເພິ່ນສຖິດຢູ່ຈຶ່ງຕຽມຕົວ.

6. ຂໍໃຫ້ຜູ້ນຶ່ງອ່ານ ມັດທາຍ 18:23-35 <u>ຊົງກ່າວຄຳອຸປະມາ</u>

ກ. ຄຳອຸປະມາແມ່ນຕອບຄຳຖາມຂອງເປໂຕທີ່ຖາມວ່າ ຕ້ອງໃຫ້ອະພັຍຈັກເທື່ອ?

ຂ. ເຈົ້າກະສັດອົງນຶ່ງຄິດບັນຊີ ແມ່ນພຣະເຈົ້າເອງໃຫ້ອະພັຍຄວາມບາບ.

ຄ. ຜູ້ແຣກຕິດໜີ້ນຶ່ງໝື່ນຫມາຍຄວາມວ່າ ບາບຫລາຍກໍຊົງອະພັຍໃຫ້ໝົດ.

ງ. ອີກຜູ້ນຶ່ງຕິດໜີ້ນຶ່ງຮ້ອຍ ແມ່ນຜູ້ອື່ນເຮັດຕໍ່ລາວນ້ອຍດຽວຍັງບໍ່ຍອມອະພັຍ.

ຈ. ພຣະເຈົ້າຊົງເອີ້ນຜູ້ບໍ່ບໍເພື່ອນນັ້ນໃຫ້ຄືນມາຮັບໂທດ ແມ່ນຄົນທີ່ບໍ່ຍອມໃຫ້ອະພັຍຜູ້ອື່ນພຣະຈົ້າກໍບໍ່ໃຫ້ອະພັຍຜູ້ນັ້ນເໝືອນກັນ.

<u>ຄຳຖາມ:</u>

1. ບົດຮຽນວັນນີ້ສອນຫຍັງທ່ານແດ່?

2. ຊັກຊວນນັກຮຽນອ້ອນວອນຂໍໃຫ້ເຮົາມີໃຈອະພັຍໂທດຊຶ່ງກັນແລະກັນ ແລະອ້ອນວອນປິດ.

ສ.ຈ. ຫູມພັນ ວົງສຸຣິດທ໌

# ບົດແນະນຳຄຣູສອນ
# ບົດຮຽນທີ 12
# ວິບັດແກ່ນັກທັມຟາຣີຊາຍ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ມັດທາຍ 23:1-30
ຂໍ້ພຣະຄັມທັງຫມົດສຳລັບບົດຮຽນນີ້: ມັດທາຍ 23
ຈຸດສຳຄັນຂອງບົດຮຽນນີ້: ເພື່ອບໍ່ຢາກໃຫ້ເຮົາເປັນຄົນສອນພຣະທັມເທົ່ານັ້ນ ຄວນປະຕິບັດດ້ວຍ.
ຄຳຖາມເພື່ອການສຳຣວດ: ເຮົາຄິດວ່າເຣື່ອງນີ້ແມ່ນສອນພວກຟາຣີຊາຍເທົ່ານັ້ນບໍ່? ເຮົາເດ?
ຈຸດປະສົງຂອງບົດຮຽນນີ້: ເພື່ອໃຫ້ເຮົາສັນນະສູດຕົນເອງໃນການນັບຖືພຣະເຈົ້າຢ່າເປັນຄືຟາຣີຊາຍ.

ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ມະນຸດທຸກຄົນຖືກສ້າງໃຫ້ມີຮູບຮ່າງຄ້າຍຄືພຣະເຈົ້າ.
- ນຳຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.

## ບົດນຳ

ການເປັນຄຣິສຕຽນເຮົາຄວນຣະມັດຣະວັງໃນການສອນພຣະທັມຂອງເຮົາບໍ່ໃຫ້ເປັນຄືພວກນັກທັມແລະພວກຟາຣີຊາຍ. ເຮົາອາຈເປັນຜູ້ສອນພຣະທັມພຣະເຈົ້າທີ່ເກັ່ງ ຫລືເທສນາພຣະທັມພຣະເຈົ້າໄດ້ດີ ສ່ວນຊີວິດເຮົາຍັງບໍ່ໄດ້ປະຕິບັດໃນສິ່ງທີ່ເຮົາເທສນາຫລືສອນ ເຮັດແນວນັ້ນເຮົາກໍແມ່ນພັກພວກຂອງນັກທັມແລະຟາຣີຊາຍ. ຫລືລາງເທື່ອເຮົາບໍ່ໄດ້ເທສນາ, ແລະບໍ່ໄດ້ສອນ ແຕ່ມັກວ່າໃຫ້ຜູ້ອື່ນ, ຕຳນິຜູ້ອື່ນແຕ່ເຮົາເອງບໍ່ເຮັດຫຍັງ ເຮົາຄວນຣະມັດຣະວັງສິ່ງເຫຼົ່ານີ້.

1. ຂໍໃຫ້ຜູ້ນຶ່ງອ່ານ ມັດທາຍ 23:1-7 ພຣະເຢຊູແລະພວກນັກທັມຟາຣີຊາຍ
   ກ. ຊົງສອນສາວົກຢ່າເປັນຄືຟາຣີຊາຍ.
   ຂ. ຟາຣີຊາຍນັ່ງ ເຄີຍນັ່ງຕັ່ງຂອງໂມເຊ ແມ່ນເຮັດຄືໂມເຊໃນການໃຊ້ອຳນາດ ແຕ່ຊີວິດຈິງບໍ່ຮັດຄືໂມເຊ.
   ຄ. ເຂົາວາງຂອງຫນັກໃສ່ບ່າມະນຸດ ສ່ວນເຂົາເອງແມ່ນແຕ່ມີດຣວກໍບໍ່ຈັບ ຫມາຍຄວາມວ່າສອນກົດຣະບຽບ ແລະສັ່ງໃຫ້ປະຊາຊົນປະຕິບັດ ສ່ວນຟາຣີຊາຍບໍ່ປະຕິບັດຈັກຢ່າງ.
   ງ. ການເຮັດຂອງເຂົາກໍເພື່ອໃຫ້ມະນຸດເຫັນ ເພື່ອຈະໄດ້ເຂົ້າໃຈວ່າເຂົາເປັນນັກທັມແທ້.
   ຈ. ເຂົາມັກນັ່ງບ່ອນມີກຽດ ແມ່ນນັ່ງແຖວຫນ້າທີ່ຊຸມນຸມ.
   ສ. ພຣະເຢຊູສັ່ງໃຫ້ຜູ້ຟັງປະຕິບັດຕາມຄຳສອນຂອງຟາຣີຊາຍ ດ້ວຍວ່າເຂົາສອນພຣະທັມພຣະເຈົ້າ.

2. ຂໍໃຫ້ຜູ້ນຶ່ງອ່ານ ມັດທາຍ 23:8-12 ສອນໃຫ້ຖ່ອມຕົວ

ກ. ຄຳວ່າ ຣັບບາຍ ອອກມາຈາກພາສາເຮັດເຣີ ຣັບ ແປວ່າ ຜູ້ຍິ່ງໃຫຍ່, ເຈົ້ານາຍ, ພຣະອາຈານ, ຫືວໜ້າບັງຄັບການຕ່າງໆ. ດ້ວຍເຫດນີ້ຟາຣີຊາຍຈຶ່ງຢາກໃຫ້ຄົນອື່ນຮ້ອງເຂົາວ່າ ຣັບບາບ,

ຂ. ສາວົກບໍ່ແມ່ນພຣະອາຈານ, ດ້ວຍວ່າພຣະອາຈານມີແຕ່ພຣະເຢຊູເທົ່ານັ້ນ, ເວລານັ້ນສາວົກຍັງເປັນນັກຮຽນຢູ່.

ຄ. ສອນໃຫ້ຖ່ອມຕົວເໝືອນພຣະອົງ, ພຣະອົງຊົງເປັນພຣະເຈົ້າແຕ່ບັງເກີດໃນຮາງຫຍ້າ.

ງ. ຜູ້ໃດຍົກຕົວຂື້ນຈະຖືກຖອຍລົງ.

3. ຂໍໃຫ້ຜູນຶ່ງອ່ານ ມັດທາຍ 23:13-31 <u>ວິບັດແກ່ຟາຣີຊາຍ</u>

ກ. ວິບັດ 7 ຢ່າງຕົກໃສ່ຟາຣີຊາຍ.

1. ຄົນໜ້າຊື່ໃຈຄົດ ຂໍ້ 13
2. ເຂົາເຮັດໃຫ້ຜູ້ເຊື່ອເໝືອນຕົກນາຮົກສອງເທົ່າ ຂໍ້ 15
3. ເປັນນາຍທາງຕາບອດ ອ້າງໃສ່ພະວິຫານຂໍ້ 16
4. ສອນໃຫ້ແບ່ງ 1 ສ່ວນ 10 ທຸກຢ່າງ ແຕ່ເຂົາຂາດຄວາມຍຸດຕິທັມ ຂໍ້ 23-24.
5. ເຂົາບໍ່ເຂົ້າໃຈໃນສິ່ງສຳຄັນທີ່ສຸດ ຄືໃຫ້ທາງໃນບໍຣິສຸດ ບໍ່ແມ່ນແຕ່ທາງນອກເທົ່ານັ້ນ ຂໍ້ 25-26.
6. ເຂົາມີຊີວິດສະອາດແຕ່ພາຍນອກ ສ່ວນທາງໃນເໝືອນອຸບໂມງ ຂໍ້ 27-28.
7. ເຣື່ອງຂອງອຸບໂມງ, ພວກອິສຣາເອນຂ້າພວກພວກຜູ້ປະກາດພຣະທັມໃນສມັຍກ່ອນຢ່າງໃດພວກຟາຣີຊາຍມີຊີວິດຄືພວກທີ່ໄດ້ຂ້າພວກຜູ້ປະກາດພຣະທັມ.

ຂ. ວິບັດນີ້ຈະຕົກຖືກຄົນທີ່ປະຕິບັດຕົວຄືຟາຣີຊາຍຄືກັນ.

ຄ. ຊີວິດພວກຟາຣີຊາຍຄ້າຍຄືອຸບໂມງຝັງສົບ ທາງນອກທາປູນຂາວໃຫ້ເບິ່ງງາມ ສ່ວນທາງໃນເປັນໜ້າຢ້ານ ດ້ວຍວ່າມີແຕ່ຊາກສົບຄົນຕາຍ ແລະກະດູກຫລ້ອນ.

ຄຳຖາມ:

1. ເຮັດແນວໃດເຮົາຈຶ່ງຈະບໍ່ເປັນຄືພວກນັກທັມຟາຣີຊາຍ?

2. ເຮັດແນວໃດເຮົາຈຶ່ງຈະຮູ້ວ່າເຮົາບໍ່ເປັນຄືພວກນັກທັມຟາຣີຊາຍ?

3. ຫາກເຮົາເປັນຄືພວກນັກທັມຟາຣີຊາຍຈະມີຫຍັງເກີດຂຶ້ນກັບເຮົາ?

4. ເປັນຫຍັງພຣະເຢຊູຈຶ່ງສອນໃຫ້ເຮົາຖ່ອມຕົວ?

ສ.ຈ. ທູນພັນ ວົງສຸຣິດທ໌

# ບົດແນະນຳຄູສອນ
# ບົດຮຽນທີ 13
# ສິ່ງທີ່ຄວນເຮັດ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ມັດທາຍ 25:31--46
ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້: ມັດທາຍ 24-25
ຈຸດສຳຄັນຂອງບົດຮຽນນີ້: ເພື່ອບອກໃຫ້ຮູ້ວ່າພຣະເຢຊູຊົງເອີ້ນເຮົາໃຫ້ເປັນຄົນເມຕາກະຣຸນາ.
ຄຳຖາມເພື່ອການສຳຣວດ: ທ່ານໄດ້ສແດງຄວາມເມຕາກະຣຸນາໄດ້ດີປານໃດ?
ຈຸດປະສົງຂອງບົດຮຽນນີ້: ເພື່ອສຳຣວດເບິ່ງວ່າເຮົາເປັນຄົນເມຕາກະຣຸນາຢ່າງໃດແດ່.

ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ມະນຸດທຸກຄົນຖືກສ້າງໃຫ້ມີຮູບຮ່າງຄ້າຍຄືພຣະເຈົ້າ.
- ນຳຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.

## ບົດນຳ

ເລົ່າເຣື່ອງຂອງກາອິນແລະອາເບນໃຫ້ນັກຮຽນຟັງ ພໍມາເຖິງຕອນພຣະເຈົ້າຖາມກາອິນວ່າ "ກາອິນ ນ້ອງຊາຍຂອງເຈົ້າຢູ່ໃສ? ໃຫ້ຄຣູປ່ຽນຄຳຖາມໆນັກຮຽນວ່າ ສົມມຸດພຣະເຈົ້າຖາມທ່ານວ່າ ຄົນທີ່ເຄີຍນັ່ງໃກ້ກັບເຈົ້າໃນໂບດທຸກອາທິດໄປໃສຄືບໍ່ເຫັນມາ ທ່ານຈະຕອບເພິ່ນແນວໃດ? ກາອິນຕອບພຣະເຈົ້າວ່າ "ຂ້ານ້ອຍບໍ່ຮູ້ຈັກ ຫລືວ່າພຣະອົງໃຫ້ຂ້ານ້ອຍເປັນຜູ້ຮັກສານ້ອງຊາຍຂອງຂ້ານ້ອຍຊັ້ນບໍ່" (ປຖກ 4:9). ຫລືວ່າທ່ານຈະຕອບພຣະເຈົ້າຄືກາອິນຕອບ? ເຮົາຮູ້ແລ້ວວ່າ ຄຳຕອບຂອງກາອິນບໍ່ເປັນຕາຟັງ ແລະຍັງບໍ່ເປັນໜ້ານັບຖືທີ່ມີອ້າຍແນວນັ້ນ, ແລະຄຳຕອບທີ່ລາວຕອບພຣະເຈົ້ານັ້ນຍັງເປັນຄຳຕອບທີ່ຂາດຄວາມໂຄຣົບຢຳເກງພຣະເຈົ້າອີກຊໍ້າ. ທ່ານບໍ່ຄິດບໍ່ວ່າພຣະເຈົ້າຊົງມີພຣະປະສົງໃຫ້ເຮົາທັງຫລາຍຮັກຊຶ່ງກັນແລະກັນ, ຊ່ອຍເຫລືອຊຶ່ງກັນແລະກັນ ມີພໍ່ຫລືແມ່ຜູ້ໃດແດ່ທີ່ບໍ່ເຫັນນ້ອງຍິງຫລືນ້ອງຊາຍເພິ່ນຈະບໍ່ຖາມອ້າຍຫລືເອື້ອຍວ່ານ້ອງເຈົ້າໄປໃສ? ຫາກເຮົາຜູ້ເປັນອ້າຍບໍ່ຮູ້ຈັກຮັກແພງນ້ອງຂອງຕົນພໍ່ແມ່ຂອງເຮົາກໍເປັນທຸກໃຈຈົນຫາຫຍັງປຽບບໍ່ໄດ້. ຖານະທີ່ເຮົາເປັນຄຣິສຕຽນກ່ອນອື່ນເຮົາຄວນຮັກພຣະເຈົ້າດ້ວຍສຸດອົກສຸດໃຈຕໍ່ມາແມ່ນ ຮັກເພື່ອນບ້ານເຫມືອນຮັກຕົນເອງ ໝາຍຄວາມວ່າຊ່ອຍເຫລືອເບິ່ງແຍງເຊິ່ງກັນແລະກັນ.

1. ກ່ອນເລີ້ມຫ້ອງຮຽນໃຫ້ຄຣູຂຽນຄຳເວົ້ານີ້ລົງກະດານ:

ກ. ຫິວເຂົ້າ.

ຂ. ຫິວນໍ້າ.

ຄ. ເປັນແຂກບ້ານມາ (ຄົນພັດບ້ານ).

ງ. ຂາດເຄື່ອງນຸ່ງຫົ່ມ.

ຈ. ເຈັບໄຂ້ຂາດຢາປົວພະຍາດ.

ສ. ຖືກຄຸກ.

2. ຂໍໃຫ້ຜູ້ນຶ່ງອ່ານ ມັດທາຍ 25: 31-33 <u>ການສະເດັດມາຄັ້ງທີສອງ</u>

ກ. ການສະເດັດມາຄັ້ງທີສອງດ້ວຍສະງ່າຣາສີທີ່ແຕກຕ່າງກັບຄັ້ງທີໜຶ່ງ ຂໍ້ 31

ຂ. ການສະເດັດມາຄັ້ງທີສອງເພິ່ນຈະມາຢ່າງຜູ້ມີອຳນາດເພື່ອຕັດສິນລົງໂທດຜູ້ບໍ່ຍອມເຊື່ອຟັງ, ໃຫ້ລາງວັນແກ່ທຸກຄົນທີ່ຍອມເຊື່ອຟັງ. ພຣະອົງຈະຊົງແຍກຝູງແກະແລະຝູງແບ້ອອກຈາກກັນຂໍ້ 32-33

ຄ. ການກະທຳສິ່ງເລັກນ້ອຍເຊັ່ນໃຈເມຕາປານີ ຊ່ອຍເຫລືອຊຶ່ງກັນແລະກັນພຣະອົງກໍຊົງນັບໄວ້ແລ້ວ.

ງ. ຣາຊອານາຈັກນັ້ນໄດ້ຕຽມໄວ້ຕັ້ງແຕ່ຕົ້ນເດີມໂລກ.

3. ຂໍໃຫ້ຜູ້ນຶ່ງອ່ານ ມັດທາຍ 25:34-40 <u>ວັນສຸດທ້າຍຂອງຜູ້ມີຄວາມເມດຕາກະຣຸນາ</u>

ກ. ຮັບຣາຊອານາຈັກສວັນດ້ວຍວ່າມີໃຈເມຕາກະຣຸນາຕໍ່ເພື່ອນມະນຸດ, ເພິ່ນຮ້ອງວ່າຄົນທີ່ໄດ້ຮັບພຣະພອນ.

ຂ. ວ່ານສິ່ງໃດກໍກ່ຽວສິ່ງນັ້ນ ຂໍ້ 35-36.

ຄ. ຈົ່ງຮຽນຮູ້ຕົນເອງວ່າຕົນເອງໄດ້ວ່ານສິ່ງໃດແດ່?

ງ. ຄວາມແປກໃຈຂອງຄົນທີ່ມີໃຈເມຕາປານີ ຂໍ້ 37-39

ຈ. ຊົງອະທິບາຍເຣື່ອງຄວາມເຊື່ອທີ່ມີການປະຕິບັດ ຂໍ້ 40

4. ຂໍໃຫ້ຜູ້ນຶ່ງອ່ານ ມັດທາຍ 25:41-46 <u>ວັນສຸດທ້າຍຂອງຜູ້ຂາດຄວາມເມດຕາກະຣຸນາ</u>

ກ. ຊົງໄລ່ຄົນທີ່ຢູ່ກ້ຳຊ້າຍໃຫ້ຫ່າງໄກຈາກພຣະອົງ, ເພິ່ນຮ້ອງເຂົາວ່າຜູ້ຖືກປ້ອຍດ່າ ຂໍ້ 41

ຂ. ຊົງບອກເຂົາ ສິ່ງເລັກນ້ອຍກະເຮັດບໍ່ໄດ້ຂໍ້ 42-43

ຄ. ເຂົາບໍ່ເຂົ້າໃຈໃນສິ່ງພຣະອົງກ່າວ ຂໍ້ 44

ງ. ຊົງກ່າວໂທດເຣື່ອງຂາດຄວາມເມຕາປານີ ຂໍ້ 45

ຈ. ລົງໂທດຕລອດໄປເປັນນິດ ຂໍ້ 46

<u>ຄຳຖາມ:</u>

1. ເຣື່ອງທີ່ທ່ານໄດ້ຍິນວັນນີ້ທ່ານເຂົ້າໃຈຢ່າງໃດ?

2. ທ່ານໄດ້ເຮັດຫຍັງແດ່ໃນຈຳນວນທີ່ພຣະເຢຊູຊົງກ່າວມານີ້?

3. ຫາກບໍ່ທັນເຮັດຈັກຢ່າງທ່ານຈະເລີ່ມຕົ້ນດ້ວຍອັນໃດກ່ອນ?

ສ.ຈ. ທູນພັນ ວົງສຸຣິດທ໌

# ບົດແນະນຳຄຣູສອນ
# ຄຣິສມັສ
# ພຣະເຈົ້າຊົງຢູ່ກັບເຮົາທຸກຄົນ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ມັດທາຍ 1:18-2:12
ຂໍ້ພຣະຄັມທັງຫມົດສຳລັບບົດຮຽນນີ້: ມັດທາຍ 1:18--2:12
ຈຸດສຳຄັນຂອງບົດຮຽນນີ້: ການເກີດຢ່າງອັສຈັນຂອງພຣະເຢຊູໄດ້ສອນວ່າເປັນຣິດອຳນາດຂອງພຣະເຈົ້າ
ຄຳຖາມເພື່ອການສຳຣວດ: ເປັນຫຍັງພຣະເຢຊູຈຶ່ງສະເດັດມາຢູ່ກັບພວກເຮົາ
ຈຸດປະສົງຂອງບົດຮຽນນີ້: ເພື່ອບອກໃຫ້ຮູ້ວ່າພຣະເຢຊູຊົງລົງມາເພື່ອຄົນທັງຫລາຍຈະໄດ້ພົ້ນ.

ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ມະນຸດທຸກຄົນຖືກສ້າງໃຫ້ມີຮູບຮ່າງຄ້າຍຄືພຣະເຈົ້າ.
- ນຳຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.

## ບົດນຳ

ໂຢເຊບເປັນເຊື້ອສາຍຂອງກະສັດດາວິດ ມັດທາຍ 1:16, ລູກາ 3:23, ເພິ່ນເປັນຄູ່ຫມັ້ນຂອງນາງມາຣີອາຜູ້ເປັນແມ່ຂອງພຣະເຢຊູທາງເນື້ອຫນັງ. ມາຣີອາໄດ້ຮັບຂ່າວຈາກເທວະດາຄັບຣິເອນວ່ານາງຈະມີທ້ອງໂດຍຣິດເດດພຣະວິນຍານບໍຣິສຸດ ຈຶ່ງໃສ່ຊື່ເພິ່ນວ່າ ເຢຊູ ມັດທາຍ 1:31. ສ່ວນໂຢເຊບບໍ່ຮູ້ເຣື່ອງອັນໃດກ່ຽວກັບເຣື່ອງນີ້ ທ່ານຈຶ່ງຢາກຖອນຫມັ້ນຈາກນາງມາຣີອາໂດຍທາງລັບເພື່ອບໍ່ໃຫ້ນາງມາຣີອາອັບອາຍຂາຍຫນ້າ ເມື່ອເປັນດັ່ງນັ້ນເທວະດາກໍປາກົດແກ່ເພິ່ນທາງຄວາມຝັນ ມັດທາຍ 1:21. ເມື່ອໂຢເຊບເຫັນນິມິດທາງຄວາມຝັນເພິ່ນຈຶ່ງປະຕິບັດຕາມຄຳຂອງເທວະດາທຸກປະການ ແລະເພິ່ນບໍ່ໄດ້ສົມສູ່ກັບນາງມາຣີອາຈົນນາງປະສູດກຸມມານເຢຊູແລ້ວ.

ຂໍໃຫ້ຜູ້ນຶ່ງອ່ານ ມັດທາຍ 1:18-25 ບົດຮຽນວັກທີນຶ່ງ, ໂຢເຊບເຫັນນິມິດ
ກ. ເຣື່ອງທັງຫມົດຂອງການກຳເນີດພຣະກຸມມານ ຂໍ້ 18
ຂ. ໂຢເຊບຕັດສິນໃຈຖອນຫມັ້ນ ຂໍ້ 19
ຄ. ເທວະດາໃຫ້ນິມິດແກ່ໂຢເຊບ ຂໍ້ 20-23
ງ. ໂຢເຊບປະຕິບັດຕາມຄຳສັ່ງຂອງເທວະດາ ຂໍ້ 24-25

ຂໍໃຫ້ຜູ້ນຶ່ງອ່ານ ມັດທາຍ 2:1-6 ບົດຮຽນວັກທີສອງ, ໂຫຣາຈານມາຂາບໄຫວ້
ກ. ພວກໂຫຣາຈານ ບໍ່ແມ່ນຄົນຢິວ, ພວກຢິວຮ້ອງເຂົາເຈົ້າວ່າ ຄົນນອກສາສນາ ເດີນທາງຜ່ານເຢຣູຊາເລັມ ຂໍ້ 1

ຂ. ຊອກຫາພຣະກຸມມານເຢຊູໂດຍການຕິດຕາມດາວພິເສດ ຂໍ້ 2
ຄ. ເຣື່ອງຂອງພຣະກຸມມານ ແລະເຣື່ອງຂອງໂຫຣາຈານໂດ່ງດັງໄປຮອດກະສັດເຮໂຣດ ຂໍ້ 3
ງ. ກະສັດເຮໂຣດປະຊຸມດ່ວນໃນພຣະຣາຊວັງ ຂໍ້ 4
ຈ. ກະສັດສືບໄດ້ຄວາມວ່າພຣະເຢຊູເກີດທີ່ໝູ່ບ້ານເບັດເລເຮັມ ຂໍ້ 5-6

ຂໍໃຫ້ຜູ້ນຶ່ງອ່ານ ມັດທາຍ 2:7-12 ບົດຮຽນວັກທີສາມ, <u>ເຮໂຣດວາງແຜນຮ້າຍ</u>
ກ. ເຮໂຣດເຊີນໂຫຣາຈານເຂົ້າເຝົ້າເພື່ອສອບຖາມແລະສັ່ງການໂຫຣາຈານ ຂໍ້ 7-8
ຄ. ພຣະເຈົ້າສົ່ງດາວນໍາທາງພວກໂຫຣາຈານ ຂໍ້ 9
ງ. ພວກໂຫຣາຈານນະມັສການພຣະກຸມມານໂດຍການຖວາຍ ຂໍ້ 10-11
ຈ. ພຣະເຈົ້າຊົງປົກປ້ອງພຣະບຸດຂອງພຣະອົງ ຂໍ້ 12

<u>ບົດສລຸບ:</u>

ຄຣິສມັສ ແມ່ນເຣື່ອງການບັງເກີດຂອງພຣະເຢຊູທີ່ໄດ້ບັງເກີດສອງພັນກວ່າປີມາແລ້ວ, ພຣະເຈົ້າຊົງເຫັນວ່າມະນຸດມີຄວາມບາບທີ່ບໍ່ສາມາດຊ່ອຍຕົນເອງໃຫ້ພົ້ນຈາກບາບໄດ້ ດັ່ງນັ້ນພຣະເຈົ້າຈຶ່ງຊົງສົ່ງພຣະບຸດອົງດຽວຂອງພຣະອົງລົງມາເກີດເພື່ອຊ່ອຍໄພ່ພົນຂອງພຣະອົງໃຫ້ຫລຸດພົ້ນຈາກບາບກັມທີ່ເຂົາກະທໍາ. ຊາດຢິວຕັ້ງໃຈລໍຖ້າພຣະເມຊີອາມາຊ່ອຍແຕ່ພວກເຂົາເຈົ້າບໍ່ຮູ້ວ່າພຣະເຢຊູແມ່ນພຣະເມຊີອາທີ່ເຂົາລໍຖ້າ ດັ່ງນັ້ນເຂົາຈຶ່ງຫາທາງທໍາລາຍພຣະເມຊີອາຜູ້ທີ່ສະເດັດມາຊ່ອຍໂດຍອອກນາມຊື່ວ່າພຣະເຢຊູ. ມາເຖິງບັດນີ້ເຣື່ອງການບັງເກີດຂອງພຣະເຢຊູນີ້ໄດ້ແຜ່ຂຍາຍອອກໄປທົ່ວໂລກດ້ວຍເຫດນີ້ໂລກຈຶ່ງສເລີມສລອງງານນີ້ທຸກໆປີ, ເຮົາສັງເກດເຫັນວ່າບໍ່ມີງານວັນເກີດໃຜຈະຍິ່ງໃຫຍ່ຈົນໂລກສລອງແນວນີ້ ແລະຍັງຈະສລອງກັນຕໍ່ໄປຈົນກວ່າພຣະອົງຈະສະເດັດກັບຄືນມາຄັ້ງທີສອງ. ດ້ວຍເຫດນີ້ເຮົາຈຶ່ງເວົ້າໄດ້ວ່າພຣະເຈົ້າຊົງສະຖິດຢູ່ກັບເຮົາ. ແລ້ວຈຶ່ງນໍານັກຮຽນອ້ອນວອນຂອບພຣະຄຸນ.

ສ.ຈ. ທູນພັນ ວົງສຸຣິດທ໌